**ສານຈາກລັດຖະມົນຕີ ຕ່າງປະເທດ ຄອນໂດຣີຊາໄຣສ**

ເຖິງທ່ານຜູ້ອ່ານ:



ປີນີ້, ປະມານໜຶ່ງລ້ານຄົນໃນທົ່ວໂລກເຊິ່ງມີຜູ້ຊາຍ, ຜູ້ຍິງ, ແລະເດັກນ້ອຍການ ດຳລົງຊີວິດຂອງເຂົາເຈົ້າຈະຖືກຣຸກຮານຍ້ອນນັກຄ້າມະນຸດ.ນີ້ແມ່ນຮູບແບບໃໝ່ຂອງ ຂ້າທາດທີ່ໜ້າຢ້ານກາວເຊິ່ງມັນບໍ່ເລືອກເຟັ້ນທຸກຊັ້ນຄົນໃນສັງຄົມ,ແລະສະຫະລັດອາເມຣິກາ ຈຶ່ງມຸ້ງໝັ້ນຮຽກຮ້ອງໃຫ້ຊາວໂລກຕໍ່ສູ້ເພື່ອເອົາຊະນະກັບການຄ້າມະນຸດ ກວມເອົາ 170 ປະເທດ, ເອກະສານບົດລາຍງານການຄ້າມະນຸດປະຈຳປີທີ 8th ເປັນນບົດລາຍງານ ທີ່ລວບລວມລ້າສຸດ. ບົດລາຍງານນີ້ໄດ້ຮຽກຮ້ອງໃຫ້ປະເທດຕ່າງໆພະຍາຍາມນຳເອົາຜູ້ກະທຳຜິດ ມາດຳເດີນຄະດີຕາມກົດໝາຍ,ແລະປົກປ້ອງຜູ້ທີ່ຕົກເປັນເຍື່ອເຄາະຮ້າຍ,ແລະໃນທີ່ສຸດອາດສະຍາ ກອນການຄ້າມະນຸດຕ້ອງລົ້ມສະຫຼາຍຢ່າງມະຫັນ.

ພວກຂ້າພະເຈົ້າມີຄວາມປິຕິຊົມຊື່ນ ນັບວ່າເປັນປີທີເຈັດແລ້ວທີ່ໄດ້ສ້າງຕັ້ງຫ້ອງການຕິດຕາມ ກວດກາລາຍງານເພື່ອຕໍ່ຕ້ານການຄ້າມະນຸດຂອງກະຊວງການຕ່າງປະເທດສະຫະລັດອາເມຣິກາ, ຢູ່ໃນສັດຕະວັດທີ 21 ສະຫະລັດອາເມຣິກາແລະປະເທດແລະພັນທະມິດທີ່ໃກ້ສິດ ໄດ້ໃຫ້ຄວາມສຳຄັນຢ່າງຈິງຈັງຕໍ່ກັບຜູ້ທີ່ນຳມະນຸດມາຄ້າຂາຍ. ລັດຖະບານໄດ້ຕັດສິນໃຈ ຕັ້ງ ລາງວັນໃຫ້ແກ່ຜູ້ທີ່ພົບເຫັນ, ກຸ່ມສິດທິມະນຸດ ແລະ ໃນກຸ່ມຜູ້ຍິງ, ຕາມອົງການທ້ອງຖິ່ນທີ່ ເຊື່ອຖືໄດ້ແລະບັນດາຜູ້ຄົນທີ່ມີຄວາມກ້າຫານໄດ້ອຸທິຕົນເພື່ອສັກສີຄວາມກ້າວໜ້າຂອງມະນຸດໃນ ໂລກ. ທຸກໆປະເທດປະກອບມີການຄ້າມະນຸດແລະການສົ່ງອອກ, ແລະບໍ່ມີປະເທດໃດ, ແມ້ກະທັ້ງປະເທດຂອງຂ້າພະເຈົ້າເອງກໍ່ຍັງໄດ້ປ້ອງກັນ.

ຈຸດປະສົງອັນຕົ້ນຕໍຂອງບົດລາຍງານສະບັບນີ້ໄດ້ຊີ້ໃຫ້ເຫັນເຖິງຜົນສຳເລັດໃນຫວ່າງມໍ່ໆນີ້ແລະໄດ້ ກະຕຸກຊຸກຍູ້ໃຫ້ລັດຖະບານແກ້ໄຂບັນຫາຂອງເຂົາເຈົ້າເພື່ອປະເຊີນໜ້າກັບຜູ້ຫວັງຜົນປະໂຫຍດ ຈາກຜູ້ອອ່ນແອກວ່າ ແລະຜູ້ມີພົມນ້ອຍຢູ່ໃນສັງຄົມ. ພ້ອມດຽວກັນນັ້ນຂ້າພະເຈົ້າເຊື່ອໝັ້ນວ່າ ວິທີການນີ້ ການເພີ້ມຂຶ້ນຂອງຜູ້ທີ່ຕົກເປັນເຫຍື່ອເຄາະຮ້າຍຈະໄດ້ຮັບການຊ່ວຍເຫຼືອຢ່າງຕໍ່ເນື່ອງ, ໄດ້ຮັບການພື້ນພູສຸຂະພາບຈິດ, ແລະສ້າງຊີວິດໃຫ້ ຜູ້ທີ່ຕົກເປັນເຫຍື່ອເຄາະຮ້າຍຄືນໃໝ່

ດ້ວຍຄວາມຈິງໃຈ



ຄອນໂດຣີຊາໄຣ

**ພາກສະເໜີ**

ຈາກຄຳໃຫ້ການຂອງຜູ້ທີ່ຖືກເຄາະຮ້າຍ, ທີ່ໄດ້ລວມເອົາໄວ້ ໃນບົດລາຍງານສະບັບນີ້, ແມ່ນໝາຍເຖິງການສະ ແດງຄວາມຄິດຄວາມເຫັນສ່ວນໜຶ່ງເທົ່ານັ້ນ ແລະ ມັນບໍ່ໄດ້ເວົ້າເຖິງຮູບແບບການຄ້າມະນຸດທັງໝົດ ທີ່ເກີດຂຶ້ນ. ເລື່ອງລາວເຫຼົ່ານີ້ ສາມາດເກີດຂຶ້ນໄດ້ເກືອບທຸກໆທີ່ນແຫ່ງໃນໂລກ. ເລື່ອງລາວເຫຼົ່ານີ້ ຖືກສະເໜີໃຫ້ເຫັນເປັນອຸທາຫອນ ກ່ຽວກັບການຄ້າມະນຸດໃນຫຼາຍໆຮູບແບບ ແລະ ເກີດຂຶ້ນໃນຫຼາຍສະຖານທີ່ແຕກຕ່າງກັນ. ບໍ່ມີປະເທດໃດທີ່ຈະສາມາດຫຼີກລ້ຽງມັນໄດ້. ຊື່ຂອງຜູ້ຖືກເຄາະຮ້າຍທັງໝົດທີ່ປະກົດຢູ່ໃນບົດລາຍງານສະບັບນີ້ ເປັນຊື່ທີ່ສົມມຸດຂຶ້ນມາ. ຮູບພາບຕ່າງໆ ທີ່ປະກົດຢູ່ເທິງໜ້າປົກຂອງບົດລາຍງານສະບັບນີ້ ແລະ ຮູບພາບຕ່າງໆທີ່ບໍ່ມີຄຳບັນລະຍາຍສ່ວນໃຫຍ່ ໃນບົດລາຍງານສະບັບນີ້ ບໍ່ແມ່ນຮູບຂອງຜູ້ເຄາະຮ້າຍຈາກການຄ້າມະນຸດ, ແຕ່ເປັນຮູບ ພາບທີ່ນຳມາສະແດງໃຫ້ເຫັນຮູບແບບຕ່າງໆຂອງການສະແຫວງຫາຜົນປະໂຫຍດ ທີ່ຊ່ວຍນິຍາມການຄ້າມະນຸດ ແລະ ວັດທະນະທຳຕ່າງໆທີ່ຜູ້ຖືກເຄາະຮ້າຍຖືກພົບເຫັນ.

**ຈຸດປະສົງ**

ມັນເປັນບັນຍັດຕາມກົດໝາຍ ທີ່ກະຊວງການຕ່າງປະເທດຕ້ອງໄດ້ສະເໜີບົດລາຍງານປະຈຳປີໃຫ້ລັດຖະສະພາຂອງສະຫະລັດ ກ່ຽວກັບຄວາມພະຍາຍາມຂອງລັດຖະບານຕ່າງປະເທດ ເພື່ອລົບລ້າງຮູບການຮຸນແຮງຕ່າງໆ ຂອງການຄ້າມະນຸດ. ບົດລາຍງານສະບັບນີ້ແມ່ນບົດລາຍງານປະຈຳປີທີແປດກ່ຽວກັບການຄ້າມະນຸດ. ເປັນບົດລາຍງານທີ່ຕັ້ງໃຈທີ່ຈະສ້າງຈິດສຳນຶກໃນທົ່ວໂລກ, ເພື່ອຍົກໃຫ້ເຫັນເຖິງຄວາມພະຍາຍາມຂອງປະຊາຄົມໂລກ ແລະ ເພື່ອຊຸກຍູ້ໃຫ້ລັດຖະບານຕ່າງປະເທດໄດ້ລົງມືປະຕິບັດຢ່າງແທ້ຈິງ ໃນການຕໍ່ຕ້ານການຄ້າມະນຸດໃນຮູບແບບ ຕ່າງໆ.

ກົດໝາຍຂອງສະຫະລັດ ທີ່ວາງແນວທາງໃນການຕໍ່ສູ້ຕ້ານການຄ້າມະນຸດ, ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍໃນປີ 2000, ສະບັບປັບປຸງ (TVPA), ລະບຸໄວ້ວ່າຈຸດປະສົງຂອງການຕໍ່ຕ້ານການຄ້າມະນຸດ ແມ່ນ ເພື່ອລົງໂທດຜູ້ຄ້າມະນຸດ, ເພື່ອປົກປ້ອງຜູ້ທີ່ຖືກເຄາະຮ້າຍ ແລະ ປ້ອງກັນບໍ່ໃຫ້ມີ ການຄ້າມະນຸດ ເກີດຂຶ້ນ. ຊ່ວຍປົດປ່ອຍຜູ້ທີ່ຕົກຢູ່ໃນສະພາບຂອງຂ້າທາດແມ່ນຈຸດມຸ້ງໝາຍອັນສູງສຸດ ຂອງບົດລາຍງານ ສະບັບນີ້ ແລະ ຂອງນະໂຍບາຍໃນການຕໍ່ຕ້ານການຄ້າມະນຸດຂອງລັດຖະບານສະຫະລັດ.

ການຄ້າມະນຸດ ແມ່ນການຂົ່ມຂູ່ແບບຫຼາຍຊັ້ນຫຼາຍມິຕິ, ມັນແມ່ນການລ່ວງລະເມີດສິດທິມະນຸດ ແລະ ອິດສະລະ ພາບຂອງຄົນອື່ນ, ມັນເພີ່ມຄວາມສ່ຽງໃຫ້ສະຫວັດດີພາບຂອງໂລກ ແລະ ມັນຫຼໍ່ລ້ຽງໃຫ້ອົງກອນອາສະຍາກຳຈະ ເລີນເຕີບໂຕ.

ການຄ້າມະນຸດມີຜົນສະທ້ອນຮ້າຍແຮງຕໍ່ຜູ້ທີ່ຖືກເຄາະຮ້າຍແຕ່ລະຄົນ,ເຊິ່ງສ່ວນໃຫຍ່ກໍ່ຈະຖືກທາລຸນນະກຳ ທາງຮ່າງກາຍ ແລະ ຈິດໃຈ, ຖືກຂົ່ມຂືນ, ຕົນເອງ ແລະ ຄອບຄົວຖືກຂົ່ມຂູ່, ແລະ ແມ້ກະທັ້ງ

ເສຍຊີວິດ. ແຕ່ວ່າການຄ້າມະນຸດ ບໍ່ພຽງແຕ່ສິ່ງຜົນສະທ້ອນໃຫ້ແກ່ຜູ້ທີ່ຖືກເຄາະຮ້າຍເທົ່ານັ້ນ; ມັນເປັນບ່ອນທຳລາຍ,ແຕະຕ້ອງ ສະຫວັດດີພາບ, ຄວາມປອດໄພ ແລະ ຄວາມສະຫງົບສຸກຂອງທຸກໆຊາດ

ການເຕີບໃຫຍ່ຂະຫຍາຍຕົວຂອງ ບັນດາປະຊາຊາດ ທີ່ອອກແຮງຕໍ່ສູ້ເພື່ອລົບລ້າງອາສະຍາກຳອັນຊົ່ວຮ້າຍນີ້. ປະເທດໜຶ່ງໆ ທີ່ບໍ່ໄດ້ອອກແຮງປະຕິບັດຕາມມາດຕະຖານຂັ້ນຕ່ຳ ໃນການລົບລ້າງການຄ້າມະນຸດ, ເຊິ່ງໄດ້ລະບຸໂດຍສັງເຂບ ໃນກົດໝາຍວ່າດ້ວຍການປົກປ້ອງຜູ້ທີ່ຖືກເຄາະຮ້າຍ, ໄດ້ຮັບການຈັດອັນດັບຢູ່ໃນ “ລະດັບ 3” ຂອງບົດລາຍງານສະບັບນີ້. ການຈັດອັນດັບດັ່ງກ່າວ ອາດຈະມີຜົນໃນການລະງັບການຊ່ວຍເຫຼືອ ຕ່າງປະເທດ ຂອງສະຫະລັດ ທີ່ບໍ່ກ່ຽວຂ້ອງກັບດ້ານມະນຸດສະທຳ ແລະ ການຄ້າ. ໃນການຈັດອັນດັບຄວາມພະຍາຍາມຂອງລັດຖະບານຕ່າງປະເທດ, ບົດລາຍງານການຄ້າມະນຸດ ໄດ້ຍົກໃຫ້ເຫັນ “ສາມ P” ຄື ການດຳເນີນຄະດີຕາມກົດໝາຍ, ການປົກປ້ອງ ແລະ ການປ້ອງກັນ. ແຕ່ວ່າ ວິທີການປະຕິບັດ ໂດຍຖືເອົາຜູ້ທີ່ຖືກເຄາະຮ້າຍເປັນສູນກາງ ໃນການຄ້າມະນຸດ ມັນຮຽກຮ້ອງໃຫ້ພວກເຮົາເອົາໃຈໃສ່ “ສາມ R” ຄື ການຊ່ວຍເຫຼືອ, ການຟື້ນຟູ ແລະ ການກັບຄືນສູ່ສັງຄົມເດີມ ແລະ ສົ່ງເສີມການຮຽນຮູ້ ແລະ ແລກປ່ຽນວິທີການປະຕິບັດທີ່ດີທີ່ສຸດ ໃນຂົງເຂດເຫຼົ່ານີ້. ພວກເຮົາຕ້ອງເອົາໃຈໃສ່ຊ່ວຍເຫລືອຜູ້ທີ່ຖືກເຄາະຮ້າຍແລະສ້າງຄວາມຫວັງແລະຊີວິດໃໝ່ໃຫ້ພວກເຂົາເຈົ້າ

**ການຄ້າມະນຸດໄດ້ນິຍາມ**

ກົດໝາຍວ່າດ້ວຍການປົກປ້ອງຜູ້ທີ່ຖືກເຄາະຮ້າຍ ໄດ້ນິຍາມ
“ຮູບແບບອັນຮຸນແຮງຂອງການຄ້າມະນຸດ” ວ່າ a.) ການຄ້າມະນຸດເພື່ອຈຸດປະສົງທາງເພດ, ເຊິ່ງເປັນການປະກອບການຄ້າທາງເພດ ເຊິ່ງຊັກຊວນມາໂດຍ ການໃຊ້ກຳລັງ, ການຫຼອກລວງ ຫຼື ບັງຄັບຂູ່ເຂັນ, ຫຼື ການທີ່ຄົນໆໜຶ່ງຖືກຊັກຊວນ ໃຫ້ກະທຳການດັ່ງກ່າວ ໂດຍ ທີ່ຍັງບໍ່ທັນມີອາຍຸຄົບ 18 ປີ; ຫຼື b.) ການຊັກຊວນ, ການໃຫ້ທີ່ພັກອາໃສ, ການຂົນສົ່ງ, ການສະໜອງໃຫ້ ຫຼື ການຫາມາເຊິ່ງບຸກຄົນ ເພື່ອ ການໃຊ້ແຮງງານ ຫຼື ບໍລິການ ໂດຍການໃຊ້ກຳລັງ, ການຫຼອກລວງ ຫຼື ບັງຄັບຂູ່ເຂັນ ເພື່ອຈຸດປະສົງໃຫ້ຕົກເປັນ ທາດໂດຍປາສະຈາກຄວາມສະໝັກໃຈ, ມີສະພາບຕ້ອງຕົກເປັນທາດ, ການຕົກເປັນທາດເພື່ອໃຊ້ໜີ້, ຫຼື ຈາກ ການຄ້າທາດ. ຜູ້ທີ່ຖືກເຄາະຮ້າຍຜູ້ໜຶ່ງ ບໍ່ຈຳເປັນຈະຕ້ອງຖືກຂົນສົ່ງຈາກສະຖານທີ່ໜຶ່ງ ໄປຫາສະຖານທີ່ໜຶ່ງ ເພື່ອໃຫ້ການກໍ່ອາ ສະຍາກຳດັ່ງກ່າວ ຖືກຕ້ອງຕາມນິຍາມເຫຼົ່ານີ້.

**ຂອບເຂດ ແລະ ລັກສະນະຂອງການຄ້າທາດສະໄໝໃໝ່**

ກໍລະນີທີ່ພົບໄດ້ໂດຍທົ່ວໄປຂອງການຄ້າມະນຸດ ແມ່ນການໃຊ້ກຳລັງ, ການຫຼອກລວງ ຫຼື ບັງຄັບຂູ່ເຂັນ ເພື່ອຈຸດປະ ສົງໃນການຂູດຮີດບຸກຄົນໆໜຶ່ງເພື່ອສະແຫວງຫາຜົນປະໂຫຍດ. ຜູ້ທີ່ຖືກເຄາະຮ້າຍຜູ້ໜຶ່ງ ອາດຈະເປັນຜູ້ທີ່ຖືກກົດ ຂີ່ຂູດຮີດເພື່ອໃຊ້ແຮງງານ, ຖືກກົດຂີ່ຂູດຮີດທາງເພດ, ຫຼື ທັງສອງຢ່າງ.

ການຂູດຮີດເພື່ອໃຊ້ແຮງງານ ລວມໄປ ເຖິງ ການຄ້າທາດ, ການໃຊ້ແຮງງານໂດຍການບັງຄັບ ແລະ ການຕົກເປັນທາດເພື່ອໃຊ້ໜີ້. ການກົດຂີ່ຂູດຮີດທາງ ເພດ ໂດຍທົ່ວໄປ ລວມທັງການກະທຳລຸນນະກຳ ພາຍໃນອຸດສາຫະກຳເພື່ອການຄ້າທາງເພດ. ໃນກໍລະນີ ອື່ນໆ, ຜູ້ທີ່ຖືກເຄາະຮ້າຍຖືກກົດຂີ່ຂູດຮີດ ຢູ່ໃນເຮືອນສ່ວນບຸກຄົນ ໂດຍສ່ວນໃຫຍ່ເຈົ້າຂອງບ້ານບັງຄັບໃຫ້ມີເພດສຳພັນ ແລະ ທັງອອກແຮງງານນຳ. ການໃຊ້ກຳລັງ ຫຼື ບັງຄັບຂູ່ເຂັນອາດຈະເປັນການໃຊ້ຄວາມຮຸນແຮງໂດຍກົງ ແລະ ການໃຊ້ຫຼັກ ຈິດຕະວິທະຍາ.

ຕາມການຄາດຄະເນ ທີ່ເຮັດຂຶ້ນພາຍໃນຂອບເຂດ ແລະຂະໜາດຂອງການຄ້າທາດໃນສະໄໝໃໝ່. ອົງການ ແຮງ ງານສາກົນ (ILO) ເຊິ່ງເປັນອົງການສະຫະປະຊາຊາດ ເຊິ່ງມີໜ້າທີ່ໃນການກຳນົດ ມາດຕະຖານແຮງງານ, ການ ຈັດຫາງານ ແລະ ບັນຫາການປົກປ້ອງສັງຄົມ ເຊິ່ງຄາດຄະເນວ່າ ມີຄົນຈຳນວນ 12.3 ລ້ານຄົນ ຖືກບັງຄັບ ໃຫ້ ອອກແຮງງານ, ຕ້ອງຕົກເປັນທາດເພື່ອໃຊ້ໜີ້, ຖືກໃຊ້ແຮງງານເດັກໂດຍການບັງຄັບ ແລະ ຕົກເປັນທາດ ທາງເພດ ໃນເວລາໃດກໍ່ຕາມ; ການຄາດຄະເນອື່ນໆ ແມ່ນຢູ່ໃນລະຫວ່າງ 4 ລ້ານ ເຖິງ 27 ລ້ານຄົນ.

ແຕ່ລະປີ, ອີງຕາມການຄົ້ນຄວ້າວິໃຈພາຍໃຕ້ການສະໜັບສະໜູນຂອງລັດຖະບານສະຫະລັດ ທີ່ເຮັດສຳເລັດໃນປີ 2006, ມີປະມານ 800,000 ຄົນ ທີ່ຖືກຄ້າຜ່ານຊາຍແດນສາກົນ, ເຊິ່ງຍັງບໍ່ໄດ້ລວມເອົາອີກຫຼາຍໆຄົນ ທີ່ຖືກຄ້າ ຢູ່ພາຍໃນປະເທດຂອງເຂົາເຈົ້າເອງ. ປະມານ 80 ສ່ວນຮ້ອຍຂອງຜູ້ທີ່ຖືກເຄາະຮ້າຍຂ້າມຊາດແມ່ນ ແມ່ຍິງ ແລະ ເດັກນ້ອຍແມ່ຍິງ ແລະ 50 ສ່ວນຮ້ອຍແມ່ນເດັກນ້ອຍ. ໂດຍສ່ວນໃຫຍ່ແລ້ວ ຜູ້ທີ່ຖືກເຄາະຮ້າຍຂ້າມຊາດແມ່ນ ແມ່ຍິງທີ່ຖືກຄ້າ ເພື່ອເຂົ້າສູ່ການສະແຫວງຫາຜົນປະໂຫຍດເພື່ອການຄ້າທາງເພດ. ໃນຈຳນວນນີ້ ຍັງບໍ່ໄດ້ລວມ ເອົາ ຜູ້ທີ່ຖືກເຄາະຮ້າຍຊາຍ-ຍິງ ຈຳນວນລ້ານໆຄົນໃນທົ່ວໂລກທີ່ຖືກຄ້າຢູ່ພາຍໃນປະເທດຂອງເຂົາ ເຈົ້າເອງ- ເຊິ່ງສ່ວນໃຫຍ່ ແມ່ນແຮງງານທີ່ຖືກບັງຄັບ ແລະ ອອກແຮງງານເພື່ອໃຊ້ໜີ້.

ບັນດາຜູ້ຄ້າມະນຸດ ຈ້ອງຈະທຳຮ້າຍຜູ້ທີ່ອ່ອນແອ, ເປົ້າໝາຍຂອງເຂົາເຈົ້າ ສ່ວນໃຫຍ່ແມ່ນເດັກນ້ອຍ ແລະ ເດັກ ນ້ອຍແມ່ຍິງ, ກົນອຸບາຍຂອງເຂົາເຈົ້າມີລັກສະນະສ້າງສັນ ແລະປາສະຈາກຄວາມ ເມດຕາປານີ, ອອກແບບມາ ເພື່ອຫຼອກລວງ, ບັງຄັບຂູ່ເຂັນ ແລະເອົາຊະນະຄວາມໄວ້ວາງໃຈ ຂອງຜູ້ທີ່ມີທ່າອ່ຽງຈະເປັນຜູ້ຖືກເຄາະຮ້າຍ. ກົນອຸບາຍສ່ວນໃຫຍ່ຈະກ່ຽວຂ້ອງກັບ ການໃຫ້ຄຳໝັ້ນສັນຍາວ່າຈະມີຊີວິດທີ່ດີກວ່າ ດ້ວຍການແຕ່ງງານ, ການມີວຽກ ເຮັດງານທຳ, ໂອກາດໃນການສຶກສາ, ຫຼື ແຕ່ງງານ

ສັນຊາດຂອງຄົນທີ່ຖືກຄ້າແມ່ນມີຄວາມຫຼາກຫຼາຍເທົ່າໆກັບວັດທະນະທຳຂອງໂລກ. ບາງຄົນຍ້າຍຖິ່ນຖານຈາກ ປະເທດທີ່ກຳລັງພັດທະນາ, ເພື່ອຊອກຫາຊີວິດທີ່ດີກວ່າ ໂດຍການຫາວຽກເຮັດງານທຳທີ່ໃຊ້ສີມືແຮງງານຕ່ຳ ຢູ່ໃນ ປະເທດທີ່ມີຄວາມຈະເລີນຮຸ່ງເຮືອງກວ່າ. ຄົນອື່ນໆຕົກເປັນຜູ້ທີ່ຖືກເຄາະຮ້າຍຈາກ ການອອກແຮງງານໂດຍຖືກ ບັງຄັບ ແລະ ອອກແຮງງານເພື່ອໃຊ້ໜີ້ ໃນປະເທດຂອງເຂົາເຈົ້າເອງ. ແມ່ຍິງກະຕືລືລົ້ນທີ່ຈະມີອະນາຄົດທີ່ດີກວ່າ

ແລະ ອ່ອນໄຫວຕໍ່ສິ່ງລໍ້ໃຈ ຄືສັນຍາ ວ່າມີວຽກເຮັດງານທຳໃນຕ່າງປະເທດ ເຊັ່ນ: ຮັບຈ້າງດູແລເດັກນ້ອຍ, ສາວ ເສີບ ຫຼືນາງແບບ--ເປັນວຽກງານທີ່ຜູ້ຄ້າມະນຸດປຸ່ງນໃຫ້ເປັນຝັນຮ້າຍ ທີ່ຕ້ອງກາຍເປັນໂສເພນີໂດຍບໍ່ສາມາດ ຖອນຕົວອອກມາໄດ້ບາງຄອບຄົວຍົກລູກຂອງເຂົາເຈົ້າ ໃຫ້ກັບຜູ້ອື່ນ, ສ່ວນໃຫຍ່ຈະແມ່ນພີ່ນ້ອງຂອງເຂົາເຈົ້າ ເອງ ເຊິ່ງສັນຍາວ່າຈະໃຫ້ໂອກາດ ແລະ ການສຶກສາທີ່ດີ, ແຕ່ຊໍ້າພັດຂາຍເດັກນ້ອຍເຫຼົ່ານັ້ນ ໃຫ້ຕົກຢູ່ໃນສະພາບ ຖືກກົດຂີ່ຂູດຮີດ.

**ສ່ວນສຳຄັນຂອງບົດລາຍງານການຄ້າມະນຸດ ປະຈຳປີ 2008**

ບົດລາຍງານການຄ້າມະນຸດແມ່ນ ບົດລາຍງານ ກ່ຽວກັບຄວາມພະຍາຍາມຂອງລັດຖະບານ ໃນການຕໍ່ຕ້ານຮູບ ແບບອັນຮຸນແຮງຂອງການຄ້າມະນຸດ ທີ່ລວບລວມໄວ້ທົ່ວໂລກ. ບົດລາຍງານສະບັບນີ້ ກວມເອົາໄລຍະເວລາລະ ຫວ່າງເດືອນເມສາ 2007 ເຖິງເດືອນມີນາ 2008. ມັນກວມເອົາບັນດາປະເທດທີ່ຖືກຈັດໃຫ້ເປັນປະເທດຕົ້ນທາງ, ປະເທດທາງຜ່ານ ແລະ ປະເທດປາຍທາງ ເຊິ່ງມີຜູ້ທີ່ຖືກເຄາະຮ້າຍຈາກຮູບການອັນຮຸນແຮງຂອງການຄ້າມະນຸດ ໃນຈຳນວນທີ່ແນ່ນອນ. ບົດລາຍງານການຄ້າມະນຸດ ປະຈຳປີ 2008ສະແດງໃຫ້ເຫັນ ການປັບປຸງຂໍ້ມູນໃໝ່, ການ ສັງເກດເຖິງລັກສະນະແລະຂອບເຂດຂອງຮູບການ ຂ້າທາດສະໄໝໃໝ່ໃນທົ່ວໂລກ ແລະ ການປະຕິບັດມາດຕະ ການຕ່າງໆ ຂອງລັດຖະບານໃນທົ່ວໂລກ ເພື່ອຕໍ່ຕ້ານ ແລະ ລົບລ້າງການຄ້າມະນຸດ.

ເນື່ອງຈາກການຄ້າມະນຸດ ມີທ່າອ່ຽງທີ່ຈະແຜ່ລາມເຂົ້າໄປສູ່ທຸກໆປະເທດໃນໂລກ, ການທີ່ບໍ່ໄດ້ ກ່າວເຖິງບາງປະ ເທດ ຢູ່ໃນບົດລາຍງານນີ້ ອາດຈະເປັນພຽງສິ່ງທີ່ສະແດງໃຫ້ເຫັນວ່າ ຍັງບໍ່ມີຂໍ້ມູນທີ່ພຽງພໍ. ເລື່ອງຂອງປະເທດໄດ້ ເວົ້າເຖິງຂອບເຂດ ແລະລັກສະນະຂອງບັນຫາການຄ້າ ມະນຸດ, ເຫດຜົນຂອງການລວມເອົາຄວາມ ພະຍາຍາມ ຂອງປະເທດ ຫຼື ຂອງລັດຖະບານ ໃນການຕໍ່ສູ້ຕ້ານການຄ້າມະນຸດ. ແຕ່ລະເລື່ອງ ຍັງໄດ້ເວົ້າເຖິງການຈັດອຳດັບ ຂອງລັດຖະບານ ໃນການປະຕິບັດຕາມມາດຕະຖານຂັ້ນຕໍ່າ ໃນການລົບລ້າງການຄ້າມະນຸດ ເຊິ່ງໄດ້ບັນຍັດໄວ້ ໃນກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ, ແລະ ລວມໄປເຖິງຄຳແນະນຳຕ່າງໆ ສຳລັບມາດຕະການ ເພີ່ມເຕີມໃນການຕໍ່ສູ້ຕ້ານການຄ້າມະນຸດ. ເລື່ອງລາວທີ່ຍັງເຫຼືອຂອງປະເທດ ຍັງໄດ້ກ່າວເຖິງຄວາມພະຍາຍາມ ຂອງລັດຖະບານ ໃນການບັງຄັບໃຊ້ກົດໝາຍຕ້ານການ ຄ້າມະນຸດ, ປົກປ້ອງຜູ້ທີ່ຖືກເຄາະຮ້າຍ ແລະ ປ້ອງກັນການ ຄ້າມະນຸດ. ແຕ່ລະເລື່ອງ ໄດ້ອະທິບາຍຫຼັກເກນພື້ນຖານໃນການຈັດລະດັບປະເທດໜຶ່ງໆ ເຊັ່ນ ລະດັບ 1, ລະດັບ 2, ລະດັບ 2 ບັນຊີທີ່ຕ້ອງສັງເກດການ, ຫຼື ລະດັບ 3. ຖ້າຫາກປະເທດໜຶ່ງຖືກຈັດ ລະດັບໃຫ້ຢູ່ໃນລະດັບ 2 ບັນຊີທີ່ຕ້ອງສັງເກດການ, ເລື່ອງລາວ ກໍ່ຈະມີຄຳອະທິບາຍ ໂດຍໃຊ້ບັນທັດຖານທີ່ພົບ ຢູ່ໃນກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ.

ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ ໄດ້ລະບຸ ສາມ ປັດໃຈເພື່ອພິຈາລະນາ ໃນການຈັດລະດັບວ່າ ປະເທດໜຶ່ງ ຄວນຈະຖືກຈັດໃຫ້ຢູ່ໃນ ລະດັບ 2 (ຫຼື ລະດັບ 2

ບັນຊີທີ່ຕ້ອງສັງເກດການ) ຫຼື ລະດັບ 3: 1) ກວມເອົາ ປະເທດ ທີ່ຖືວ່າເປັນປະເທດຕົ້ນທາງ, ປະເທດທາງຜ່ານ ຫຼື ປະເທດປາຍທາງ ຂອງຮູບການຮຸນແຮງຂອງການຄ້າ ມະນຸດ; 2) ກວມເອົາລັດຖະບານຂອງປະເທດໜຶ່ງ ທີ່ບໍ່ປະຕິບັດຕາມມາດຕະຖານຂັ້ນຕໍ່າຂອງ ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ ເຊິ່ງລວມໄປເຖິງ, ໂດຍສະເພາະຢ່າງຍິ່ງ,ກວມເອົາການສໍ້ລາດບັງຫຼວງທີ່ກ່ຽວຂ້ອງ ກັບການຄ້າມະນຸດຂອງລັດຖະບານ.; ແລະ 3)  ແຫຼ່ງຊັບພະຍາກອນ ແລະ ຄວາມອາດສາມາດຂອງລັດຖະບານ ໃນການຕໍ່ຕ້ານ ແລະ ລົບລ້າງ ຮູບການຮຸນແຮງຂອງການຄ້າມະນຸດ.

ບາງປະເທດ ໄດ້ຈັດກອງປະຊຸມ ແລະ ສ້າງຕັ້ງໜ່ວຍປະຕິບັດງານ ຫຼື ວາງແຜນປະຕິບັດການແຫ່ງຊາດ ເພື່ອຕັ້ງ ເປົ້າໝາຍໃນການຕໍ່ຕ້ານການຄ້າມະນຸດ.  ເຖິງຢ່າງໃດກໍ່ຕາມ, ການຈັດກອງປະຊຸມ, ວາງແຜນການ ແລະ ສ້າງ ໜ່ວຍງານປະຕິບັດການ ແຕ່ພຽງຢ່າງດຽວກໍ່ບໍ່ໄດ້ມີຄວາໝາຍ ໃນການປະເມີນຄ່າຄວາມພະຍາຍາມຂອງປະ ເທດ.  ຖ້າຈະເວົ້າໃຫ້ຖືກຕ້ອງກໍ່ຄື, ສ່ວນສຳຄັນຂອງບົດລາຍງານ ເວົ້າເຖິງມາດຕະການທີ່ເປັນຮູບປະທຳຂອງລັດ ຖະບານ ໃນການຕໍ່ສູ້ຕ້ານກັບການຄ້າມະນຸດ, ໂດຍສະເພາະຢ່າງຍິ່ງ ແມ່ນການດຳເນີນຄະດີຕາມກົດໝາຍ, ການ ລົງໂທດ, ແລະ ພິພາກສາຈຳຄຸກຜູ້ຄ້າມະນຸດ, ມາດຕະການປົກປ້ອງຜູ້ທີ່ຖືກເຄາະຮ້າຍ, ແລະ ຄວາມພະຍາຍາມ ໃນການປ້ອງກັນ.  ບົດລາຍງານບໍ່ໄດ້ໃຫ້ນ້ຳໜັກຫຼາຍຕໍ່ຮ່າງກົດໝາຍ ຫຼື ກົດໝາຍທີ່ຍັງບໍ່ທັນໄດ້ປະກາດໃຊ້.  ທ້າຍທີ່ສຸດ,ບົດລາຍງານບໍ່ໄດ້ເວົ້າເຖິງຄວາມພະຍາຍາມ ຂອງລັດຖະບານ ທີ່ປະກອບສ່ວນໂດຍທາງອ້ອມ ໃນການຫຼຸດຜ່ອນການຄ້າມະນຸດ ເຊັ່ນ: ໂຄງການສຶກສາ, ການສະໜັບສະໜູນການພັດທະນາເສດຖະກິດ, ຫຼືໂຄງການທີ່ແນໃສ ່ສົ່ງເສີມຄວາມສະເໝີພາບບົດບາດຍິງຊາຍ, ແຕ່ເຖິງຢ່າງໃດກໍ່ຕາມ ສິ່ງເຫຼົ່ານີ້ກໍ່ເປັນຄວາມ ພະຍາຍາມທີ່ຄຸ້ມ ຄ່າ.

**ວິທີການ**

ກະຊວງການຕ່າງປະເທດໄດ້ກະກຽມບົດລາຍງານສະບັບນີ້ໂດຍອາໄສຂໍ້ມູນຈາກບັນດາ ສະຖານທູດສະຫະລັດ, ບັນດາລັດຖະກອນຕ່າງປະເທດ,ບັນດາອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ແລະ ບັນດາອົງການຈັດຕັ້ງ ສາກົນ, ບົດລາຍງານທີ່ຕີພິມ, ການເດີນທາງຄົ້ນຄວ້າວິໃຈໃນທຸກໆພາກພື້ນ, ແລະ ການແນະນຳຂໍ້ມູນທີ່ສົ່ງໃຫ້ tipreport@state.gov  ທີ່ຢູ່ຂອງການສົ່ງຂໍ້ຄວາມທາງອີເລັກໂຕຣນິກນີ້ ແມ່ນສ້າງຂຶ້ນສຳລັບ ບັນດາອົງການຈັດ ຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ແລະ ບຸກຄົນທົ່ວໄປໃນການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບຄວາມຄືບໜ້າ ຂອງລັດຖະບານໃນການຕໍ່ສູ້ຕ້ານການຄ້າມະນຸດ.  ບັນດາທູດຂອງສະຫະລັດທີ່ໄດ້ລາຍງານ ກ່ຽວກັບສະພາບການ ຄ້າມະນຸດ ແລະ ມາດຕະການຂອງລັດຖະບານ ບົນພື້ນຖານການຄົ້ນ ຄວ້າວິໃຈຢ່າງພິຖີພິຖັນ, ລວມໄປເຖິງການ ພົບປະກັບພະນັກງານລັດຖະກອນຈາກຫຼາຍໆ ຂະແໜງການ, ຕົວແທນຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ ຖະບານ ທີ່ຢູ່ໃນທ້ອງຖິ່ນ ແລະ ຕ່າງປະເທດ, ພະນັກງານຂອງອົງການຈັດຕັ້ງສາກົນ, ບັນດານັກຂ່າວ, ບັນດາສະ ຖາບັນການ

ສຶກສາ ແລະ ຜູ້ທີ່ຫຼຸດພົ້ນຈາກການຕົກເປັນຜູ້ເຄາະຮ້າຍ.

ໃນການລວບລວມຂໍ້ມູນຂອງບົດລາຍງານໃນປີນີ້, ກະຊວງການຕ່າງປະເທດໄດ້ເບິ່ງຄືນໃໝ່ກ່ຽວກັບແຫຼ່ງຂໍ້ມູນຂ່າວສານຂອງແຕ່ລະປະເທດໃນການຈັດອັນດັບໃນການຈັດອັນດັບຄວາມພະຍາຍາມໃນການຕ້ານການຄ້າມະ ນຸດ ຂອງລັດຖະບານແຕ່ລະປະເທດ ຕ້ອງໃຊ້ສອງຂັ້ນຕອນໃນການປະຕິບັດ:

**ຂັ້ນຕອນທີ ໜຶ່ງ: ຊອກຫາຈຳນວນທີ່ແນ່ນອນຂອງຜູ້ທີ່ຖືກເຄາະຮ້າຍ**

ກ່ອນອື່ນ, ກະຊວງການຕ່າງປະເທດ ກຳນົດວ່າ ປະເທດໜຶ່ງ ແມ່ນ "ປະເທດຕົ້ນທາງ, ປະເທດທາງຜ່ານ ຫຼືປະເທດປາຍທາງທີ່ມີຜູ້ຖືກເຄາະຮ້າຍຈາກຮູບການຮຸນແຮງຂອງການຄ້າມະນຸດຈຳນວນທີ່ແນ່ນອນ" ໂດຍທົ່ວໄປມີ ຈຳນວນຜູ້ທີ່ຖືກເຄາະຮ້າຍ ທີ່ຢູ່ໃນບັນຊີ 100 ຄົນ ຫຼືຫຼາຍກວ່ານັ້ນ, ເຊິ່ງຢູ່ໃນບົດລາຍງານສະບັບກ່ອນ ກໍ່ໃຊ້ມາດ ຕະຖານດຽວກັນນີ້. ໃນບາງປະເທດ, ຂໍ້ມູນດັ່ງກ່າວກໍ່ບໍ່ສາມາດເກັບກຳໄດ້ ດັ່ງນັ້ນ ຈຶ່ງບໍ່ໄດ້ຈັດລະດັບໃຫ້ໄດ້,ແຕ່ວ່າ ປະເທດເຫຼົ່ານັ້ນ ກໍ່ຈະຖືກລວມເຂົ້າໄວ້ໃນໝວດກໍລະນີພິເສດ ຍ້ອນວ່າມັນມີສິ່ງທີ່ສະແດງໃຫ້ເຫັນວ່າ ມີການຄ້າມະນຸດ.

**ຂັ້ນຕອນທີ ສອງ: ການຈັດລະດັບ**

ກະຊວງການຕ່າງປະເທດ ໄດ້ຈັດລະດັບແຕ່ລະປະເທດ ໃນບົດລາຍງານການຄ້າມະນຸດປະຈຳປີ 2008 ເຂົ້າໄວ້ ໃນໜຶ່ງໃນສາມບັນຊີ, ເຊິ່ງລະບຸໃນນີ້ວ່າ ລະດັບ, ທີ່ໄດ້ບັນຍັດໄວ້ໃນກົດໝາຍວ່າດ້ວຍການປົກປ້ອງຜູ້ທີ່ຖືກເຄາະ ຮ້າຍ. ການຈັດລະດັບນີ້ແມ່ນຕັ້ງຢູ່ບົນພື້ນຖານຂອງການປະຕິບັດມາດຕະການຂອງລັດຖະບານ ໃນການຕໍ່ຕ້ານ ການຄ້າມະນຸດ, ແທນທີ່ຈະແມ່ນຂະໜາດຂອງບັນຫາ ເຖິງວ່າມັນຈະມີສ່ວນສຳຄັນກໍ່ຕາມ. ກ່ອນອື່ນ ກະຊວງການຕ່າງປະເທດຈະປະເມີນຜົນວ່າລັດຖະບານໄດ້ປະຕິບັດຕາມມາດຕະຖານຂັ້ນຕ່ຳທີ່ບັນຍັດໄວ້ໃນກົດ ໝາຍ ວ່າດ້ວຍການປົກປ້ອງຜູ້ທີ່ຖືກເຄາະຮ້າຍຢ່າງຄົບຖ້ວນໃນການລົບລ້າງການຄ້າມະນຸດ (ລາຍລະອຽດຢູ່ໃນໜ້າ 228-229).
ລັດຖະບານທີ່ປະຕິບັດຕາມກົດໝາຍທີ່ໄດ້ບັນຍັດໄວ້ຢ່າງຄົບຖ້ວນ ກໍ່ຈະຖືກຈັດໃຫ້ຢູ່ໃນ ລະດັບ 1. ສຳລັບລັດຖະບານອື່ນໆ, ກະຊວງການຕ່າງປະເທດ ຈະພິຈາລະນາວ່າເຂົາເຈົ້າໄດ້ໃຊ້ຄວາມພະຍາຍາມ ໃນລະ ດັບໜຶ່ງ ຕາມທີ່ກົດໝາຍໄດ້ບັນຍັດໄວ້.ລັດຖະບານທີ່ໄດ້ໃຊ້ຄວາມພະຍາຍາມໃນລະດັບໜຶ່ງ ຕາມມາດຕະຖານ ຂັ້ນຕ່ຳ ກໍ່ຈະຖືກຈັດໃຫ້ຢູ່ໃນ ລະດັບ 2. ລັດຖະບານທີ່ບໍ່ປະຕິບັດຕາມມາດຕະຖານຂັ້ນຕ່ຳ ຢ່າງຄົບຖ້ວນ ແລະ ບໍ່ໄດ້ໃຊ້ຄວາມພະຍາຍາມໃນລະດັບໜຶ່ງຕາມທີ່ກົດໝາຍໄດ້ບັນຍັດໄວ້ ກໍ່ຈະຖືກຈັດໃຫ້ຢູ່ໃນ ລະດັບ 3. ທ້າຍທີ່ ສຸດມາດຕະຖານຂອງບັນຊີທີ່ຕ້ອງສັງເກດການພິເສດ ກໍ່ຈະຖືກນຳມາພິຈາລະນາ ແລະ ເມື່ອໃດທີ່ປະຕິບັດໄດ້, ປະເທດໃນລະດັບ 2 ກໍ່ຈະຖືກຈັດຢູ່ ໃນລະດັບ 2 ບັນຊີທີ່ຕ້ອງສັງເກດການ.

**ບັນຊີທີ່ຕ້ອງສັງເກດການພິເສດ-ລະດັບ 2 ບັນຊີທີ່ຕ້ອງສັງເກດການ**

ກົດໝາຍວ່າດ້ວຍການປົກປ້ອງຜູ້ທີ່ຖືກເຄາະຮ້າຍ ໄດ້ຈັດລະດັບປະເທດ "ບັນຊີທີ່ຕ້ອງສັງເກດການພິເສດ" ຢູ່ໃນ ບົດລາຍງານການຄ້າມະນຸດ ທີ່ຕ້ອງໄດ້ຮັບການພິຈາລະນາເປັນພິເສດ. ບັນຊີນີ້ປະກອບດ້ວຍ 1) ບັນດາປະເທດ ທີ່ໄດ້ຂຶ້ນບັນຊີເປັນ ລະດັບ 1 ໃນບົດລາຍງານສະບັບປະຈຸບັນ ເຊິ່ງໄດ້ຖືກຂຶ້ນບັນຊີເປັນ ລະດັບ 2 ໃນບົດລາຍງານ ປີ 2007; 2) ປະເທດທີ່ໄດ້ຂຶ້ນບັນຊີເປັນ ລະດັບ 2 ໃນບົດລາຍງານສະບັບປະຈຸບັນ ເຊິ່ງໄດ້ຖືກຂຶ້ນບັນຊີເປັນ ລະດັບ 3 ໃນບົດລາຍງານປີ 2007; ແລະ 3) ປະເທດທີ່ໄດ້ຂຶ້ນບັນຊີເປັນ ລະດັບ 2 ໃນບົດລາຍງານສະບັບປະຈຸ ບັນ, ເຊິ່ງ:

a) ຈຳນວນທີ່ແທ້ຈິງຂອງຜູ້ທີ່ຖືກເຄາະຮ້າຍຈາກຮູບການຮຸນແຮງຂອງການຄ້າມະນຸດ ຢູ່ໃນຈຳນວນທີ່ແນ່ນອນ ຫຼື ກຳລັງເພີ່ມຂຶ້ນໃນຈຳນວນທີ່ແນ່ນອນ;

b) ບໍ່ໄດ້ສະໜອງຫຼັກຖານພຽງພໍ ວ່າໄດ້ໃຊ້ຄວາມພະຍາຍາມຫຼາຍກວ່າເກົ່າ ໃນການຕໍ່ສູ້ຕ້ານຮູບການຮຸນແຮງ ຂອງການຄ້າມະນຸດຈາກປີທີ່ຜ່ານມາ, ລວມໄປເຖິງການສືບສວນເພີ່ມເຕີມ, ການດຳເນີນການຕາມກົດໝາຍ, ແລະ ການຕັດສິນລົງໂທດ ອາສະຍາກຳໃນການຄ້າມະນຸດ, ການຊ່ວຍເຫຼືອຜູ້ທີ່ຖືກເຄາະຮ້າຍເພີ່ມຂຶ້ນ, ແລະຫຼັກຖານການມີສ່ວນກ່ຽວຂ້ອງກັບຮູບການຮູນແຮງຂອງການຄ້າມະນຸດຂອງພະນັກງານລັດຖະກອນ ຫຼຸດລົງ; ຫຼື

c) ການກຳນົດວ່າ ປະເທດໜຶ່ງ ໄດ້ໃຊ້ພະຍາຍາມໃນລະດັບໜຶ່ງ ເພື່ອປະຕິບັດໃຫ້ໄດ້ຕາມມາດຕະຖານຂັ້ນຕ່ຳ ແມ່ນຕັ້ງຢູ່ບົນພື້ນຖານການອຸທິດຕົນ ໃນການເພີ່ມມາດຕະການປະຕິບັດໃນປີຕໍ່ໄປ. ປະເພດທີສາມນີ້ (ລວມມີ a, b, ແລະ c) ກະຊວງການຕ່າງປະເທດໄດ້ວາງເງື່ອນໄຂ " ລະດັບ 2 ບັນຊີທີ່ຕ້ອງສັງ ເກດການ". ມີ 32 ປະເທດທີ່ຖືກຈັດໃຫ້ຢູ່ໃນ ລະດັບ 2 ບັນຊີທີ່ຕ້ອງສັງເກດການ ໃນບົດລາຍງານເດືອນມິຖຸນາ 2007 ຄຽງຄູ່ກັນນີ້ ກໍ່ມີ 2 ປະເທດທີ່ໄດ້ຖືກຈັດລະດັບໃໝ່ ໃຫ້ຢູ່ໃນປະເທດ ລະດັບ 2 ບັນຊີທີ່ຕ້ອງສັງເກດການ ໃນເດືອນຕຸລາ 2007 ແລະ ມີ 7 ປະເທດ ທີ່ຖືກຕ້ອງຕາມເງື່ອນໄຂສອງປະເພດທຳອິດຂ້າງເທິງນີ້ (ເລື່ອນຂຶ້ນ ໜຶ່ງອັນດັບ ຈາກບົດລາຍງານການຄ້າມະນຸດໃນປີ 2007 ຫາ ປີ 2008), ທັງ 41 ປະເທດນີ້ໄດ້ຖືກລວມເອົາໄວ້ ໃນປະເພດ"ຢູ່ໃນລະຫວ່າງການຈັດອັນດັບ" ທີ່ເຜີຍແຜ່ໂດຍກະຊວງການຕ່າງປະເທດ ໃນວັນທີ 28 ກຸມພາ 2008.

ໃນນີ້ຈາກທັງໝົດ 34 ປະເທດ ທີ່ຢູ່ໃນ ລະດັບ 2 ບັນຊີທີ່ຕ້ອງສັງເກດການທີ່ຢູ່ໃນລະຫວ່າງການຈັດອັນດັບ, ໃນນີ້ 11 ປະເທດ ໄດ້ເລື່ອນຂຶ້ນມາຢູ່ໃນ ລະດັບ 2 ໃນບົດລາຍງານສະບັບນີ້, ໃນຂະນະທີ່ 4 ປະເທດຕົກລົງໄປຢູ່ໃນ ລະດັບ 3 ແລະ 19 ປະເທດທີເຫຼືອ ແມ່ນຢູ່ໃນ ລະດັບ 2 ບັນຊີທີ່ຕ້ອງສັງເກດການ. ປະເທດທີ່ຖືກຈັດໃຫ້ຢູ່ໃນ ບັນຊີທີ່ຕ້ອງສັງເກດການເປັນພິເສດ

ຢູ່ໃນບົດລາຍງານສະບັບນີ້ ຈະຖືກພິຈາລະນາຄືນໃໝ່ ໃນລະຫວ່າງການ ຈັດອັນດັບ ເຊິ່ງຈະໄດ້ຍື່ນຕໍ່ລັດຖະສະພາສະຫະລັດ ພາຍໃນວັນທີ 1 ກຸມພາ 2009.

## ບົດລົງໂທດທີ່ອາດຈະໄດ້ຮັບສໍາລັບປະເທດ ລະດັບ 3

ລັດຖະບານຂອງປະເທດທີ່ຢູ່ໃນ ລະດັບ 3 ອາດຈະໄດ້ຮັບການລົງໂທດທີ່ແຕກຕ່າງກັນໄປ. ລັດຖະບານສະຫະ ລັດ ອາດຈະລະງັບການຊ່ວຍເຫຼືອຕ່າງປະເທດທີ່ບໍ່ກ່ຽວຂ້ອງກັບ ດ້ານມະນຸດສະທໍາ, ບໍ່ກ່ຽວຂ້ອງກັບການຄ້າ. ປະເທດທີ່ບໍ່ໄດ້ຮັບການຊ່ວຍເຫຼືອດັ່ງກ່າວ ອາດຈະຖືກລະງັບທຶນຊ່ວຍເຫຼືອ ເພື່ອໃຫ້ພະນັກງານລັດຖະກອນຂອງ ລັດຖະບານດັ່ງກ່າວ ເຂົ້າຮ່ວມໃນໂຄງການດ້ານການສຶກສາ ແລະ ການແລກປ່ຽນວັດທະນະທໍາ. ຄຽງຄູ່ກັບ ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ, ລັດຖະບານທີ່ຕ້ອງຖືກລົງໂທດ ອາດຈະຖືກສະຫະລັດຄັດຄ້ານ ທີ່ຈະໃຫ້ຄວາມຊ່ວຍເຫຼືອ(ຍົກເວັ້ນການຊ່ວຍເຫຼືອ ດ້ານມະນຸດສະທໍາ, ດ້ານການຄ້າ, ການພັດທະນາໃນບາງຂະ ແໜງການ) ຈາກສະຖາບັນການເງິນສາກົນ ເປັນຕົ້ນ ກອງທຶນການເງິນລະຫວ່າງປະເທດ, ທະນາຄານໂລກ. ບົດລົງໂທດເຫຼົ່ານີ້, ຖ້າຫາກ ຖືກນໍາມາໃຊ້, ກໍ່ຈະມີຜົນບັງຄັບໃຊ້ ໃນວັນທີ 1 ຕຸລາ 2008.

ບົດລົງໂທດທັງໝົດ ຫຼື ສ່ວນໜຶ່ງຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ ອາດຈະຖືກຍົກເລີກໄດ້ ດ້ວຍ ການຕັດສິນຂອງທ່ານປະທານາທິບໍດີ ວ່າບົດບັນຍັດຂອງການຊ່ວຍເຫຼືອດັ່ງກ່າວ ໃຫ້ແກ່ລັດຖະບານໜຶ່ງໆ ຈະສົ່ງເສີມໃຫ້ເກີດຜົນປະໂຫຍດຕາມຈຸດປະສົງຂອງມັນ ຫຼື ບໍ່ດັ່ງນັ້ນ ກໍ່ເພື່ອຜົນປະໂຫຍດຂອງສະຫະລັດເອງ. ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍຍັງໄດ້ບັນຍັດໄວ້ວ່າ ບົດລົງໂທດ ອາດຈະຖືກຍົກເລີກໄດ້ ຖ້າເຫັນ ວ່າຈໍາເປັນເພື່ອຫຼີກລ້ຽງໃນການສົ່ງຜົນສະທ້ອນທາງລົບ ໃຫ້ກັບຈໍານວນປະຊາກອນທີ່ມີຄວາມສ່ຽງ ລວມທັງແມ່ຍິງ ແລະ ເດັກນ້ອຍ. ບົດລົງໂທດອາດຈະບໍ່ມີຜົນບັງຄັບໃຊ້ ຖ້າຫາກທ່ານປະທານາທິບໍດີ ພົບວ່າ, ຫຼັງຈາກ ທີ່ບົດລາຍງານສະບັບນີ້ ຖືກເຜີຍແຜ່ ແຕ່ວ່າກ່ອນທີ່ຈະມີການຕັດສິນລົງໂທດ, ລັດຖະບານປະເທດໜຶ່ງໆ ປະຕິບັດໄດ້ຕາມມາດຕະຖານຂັ້ນຕໍ່າ ຫຼື ໄດ້ໃຊ້ຄວາມພະຍາຍາມ ທີ່ຈະປະຕິບັດໃຫ້ໄດ້ຕາມມາດຕະຖານ.

ຖ້າບໍ່ຄໍານຶງເຖິງການຈັດລະດັບ, ທຸກໆປະເທດສາມາດດໍາເນີນການໄດ້ຫຼາຍກວ່າເກົ່າ, ເຊິ່ງລວມໄປເຖິງສະຫະ ລັດເອງ. ບໍ່ມີປະເທດໃດຈະຖືກຈັດໃຫ້ຢູ່ໃນອັນດັບເດີມຢ່າງຖາວອນ. ທຸກໆປະເທດຕ້ອງໄດ້ພະຍາຍາມ ແລະ ພະຍາຍາມຂຶ້ນຕື່ມ ໃນການຕໍ່ຕ້ານການຄ້າມະນຸດ.

## ໃຊ້ບົດລາຍງານສະບັບນີ້ແນວໃດ

ບົດລາຍງານສະບັບນີ້ ແມ່ນເຄື່ອງມືທາງການທູດ ຂອງລັດຖະບານສະຫະລັດ ໃນການ

ໃຊ້ເປັນເຄື່ອງມືອັນໜຶ່ງເພື່ອສືບຕໍ່ໃນການແລກປ່ຽນຄວາມຄິດຄວາມເຫັນ ແລະ ສົ່ງເສີມ ແລະ ໃຊ້ເປັນແນວທາງເພື່ອຊ່ວຍໃນໂຄງ ການ ແລະ ນະໂຍບາຍເພື່ອດໍາເນີນຄະດີຕາມກົດໝາຍ, ການປົກປ້ອງ ແລະ ການປ້ອງກັນ.

ສະເພາະຄໍາແນະນໍາຈະຊີ້ໃຫ້ເຫັນການຈັດລະດັບແຕ່ປະເທດໃຫ້ດີຂຶ້ນໃນອະນາຄົດ. ກະຊວງການຕ່າງ ປະເທດຈະສືບຕໍ່ປະສານກັບລັດຖະບານອື່ນໆກ່ຽວກັບເນື້ອໃນຂອງ ບົດລາຍງານດັ່ງກ່າວ ໃນການເພີ່ມທະວີ ການຮ່ວມມືເພື່ອລົບລ້າງການຄ້າມະນຸດ. ໃນປີຕໍ່ໜ້ານີ້, ແລະ ໂດຍສະເພາະໃນເດືອນ ກ່ອນຈະມີການຕັດສິນ ລົງໂທດບັນດາປະເທດໃນ ລະດັບ 3, ກະຊວງການຕ່າງປະເທດ ຈະນໍາໃຊ້ຂໍ້ມູນທີ່ເກັບກໍາໄດ້ເຫຼົ່ານີ້ ໃຫ້ມີປະສິດ ທິຜົນກວ່າເກົ່າ ໂດຍແນໃສ່ໂຄງການຊ່ວຍເຫຼືອຕ່າງໆ ແລະ ເຮັດວຽກຮ່ວມກັບປະເທດອື່ນໆ ທີ່ຕ້ອງການຄວາມ ຊ່ວຍເຫຼືອໃນການຕໍ່ຕ້ານການຄ້າມະນຸດ. ກະຊວງການຕ່າງປະເທດຫວັງວ່າບົດລາຍງານ ສະບັບນີ້ຈະເປັນສິ່ງ ກະຕຸ້ນໃຫ້ລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ ໄດ້ພະຍາຍາມຕໍ່ສູ້ຕ້ານການຄ້າມະນຸດໃນທົ່ວ ໂລກ.

## ບັນດາຮູບແບບຕົ້ນຕໍ ຂອງ ການຄ້າມະນຸດ

## ແຮງງານແບບບັງຄັບ ແລະ ການເປັນທາດທາງເພດ: ຮູບແບບຕ່າງໆ ຂອງ ການຄ້າມະນຸດ

ການເຊື່ອງຊ້ອນເນື້ອແທ້ ຂອງ ການຄ້າມະນຸດ ສະກັດກັ້ນ ການນັບທີ່ຊັດເຈນ ຂອງ ຈໍານວນ ຜູ້ປະສົບເຄາະຮ້າຍ ທີ່ຢູ່ທົ່ວໂລກ, ແຕ່ການສຶກສາທີ່ມີຢູ່ ຊີ້ໃຫ້ເຫັນວ່າ, ເວລາການຄ້າມະນຸດ ພາຍໃນຊາຍແດນ ຂອງ ປະເທດ ແມ່ນຮວມຢູ່ໃນການນັບ, ມີຫລາຍຄົນໂຍນຜູ້ເປັນເຫຍື່ອ ຂອງ ການຄ້າມະນຸດ ໄປຕົກຢູ່ໃນຮູບແບບ ຂອງ ແຮງງານ ຫລາຍກວ່າ ຜູ້ເຄາະຮ້າຍຈາກ ການຄ້າມະນຸດ ໃນທາງເພດ. ເຖິງແມ່ນວ່າການຄ້າແຮງງານ ແລະ ການຄ້າມະນຸດທາງເພດ ໄດ້ຮັບການວິເຄາະ ຢູ່ເລື້ອຍໆ ວ່າເປັນປະເດັນການຄ້າມະນຸດທີ່ແຍກກັນ, ຜູ້ປະສົບເຄາະຮ້າຍ ຂອງ ທັງສອງ ຮູບແບບ ຂອງ ການຄ້າມະນຸດ ມັກຈະມີລັກສະນະທີ່ມີອັນຄ້າຍຄືກັນ: ການຄ້າມະນຸດ ຂອງ ພວກເຂົາ ເລີ່ມຕົ້ນຄວາມເຈັບປວດ ຂອງ ພວກເຂົາເຈົ້າ ດ້ວຍການຍ້າຍຖິ່ນຖານ ເພື່ອຄົ້ນຫາ ທາງເລືອກຕ່າງໆ ດ້ານເສດຖະກິດ.

ໃຈຄວາມ ຂອງ ການຍ້າຍຖິ່ນຖານ ແມ່ນເຄີຍໄດ້ຍິນເລື້ອຍໆ ໃນການລາຍງານ ກ່ຽວກັບ ການຄ້າ ມະນຸດ ແລະ ຈິງໆແລ້ວ ການເຄື່ອນຍ້າຍ ຂອງ ຜູ້ປະສົບເຄາະຮ້າຍ ແມ່ນມີລັກສະນະຄ້າຍຄຽງກັນ ໃນຫລາຍໆ ອາດສະຍາກໍາ ກ່ຽວກັບ ການຄ້າມະນຸດ. ແຕ່ແນ່ນອນວ່າ ການເປັນທາດ ກໍສາມາດ ເກີດຂຶ້ນໄດ້ ໂດຍປາສະຈາກການເຄື່ອນຍ້າຍ ຂອງ ບຸກຄົນຜູ້ໜຶ່ງ. ໃນການວິໃຈປະເດັນບັນຫາ ຂອງ ການຄ້າມະນຸດ ແລະ ການອອກແບບ ການຕອບໂຕ້ທີ່ມີປະສິດທິຜົນ, ຈຸດສຸມ ຄວນຈະແມ່ນ

ບົນການສະແຫວງຫາປະໂຫຍດ ແລະ ການຄວບຄຸມ ບຸກຄົນຜູ້ໜຶ່ງ ໂດຍຜ່ານການໃຊ້ກຳລັງ, ການຕົວຫລອກລວງ, ຫລື ການບັງຄັບຂົ່ມຂູ່ - ບໍ່ແມ່ນການເຄື່ອນຍ້າຍ ຂອງ ບຸກຄົນນັ້ນ.

ບໍ່ວ່າຈະເປັນ ນິຍາມ ຂອງ ສາກົນ ກ່ຽວກັບ ການຄ້າມະນຸດ, ດັ່ງທີ່ໄດ້ນິຍາມ ໃນເອກະສານທາງກົດຫມາຍ ຂອງ ສະຫະປະຊາຊາດ ປີ 2000 ເພື່ອສະກັດກັ້ນ, ປາບປາມ, ແລະ ລົງໂທດ ການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ຫລື ນິຍາມ ຂອງ ສະຫະລັດ ກ່ຽວກັບ ຮູບແບບ ຂອງ ການຄ້າມະນຸດ ທີ່ເຂັ້ມງວດກວດຂັນປານໃດ, ດັ່ງທີ່ໄດ້ນິຍາມ ໃນກົດຫມາຍ ຂອງ ສະຫະພັນ ຂອງ ສະຫະລັດ, ຮຽກຮ້ອງ ການເຄື່ອນຍ້າຍ ຂອງ ຜູ້ປະສົບເຄາະຮ້າຍ. ການເຄື່ອນຍ້າຍ ແມ່ນບໍ່ຈຳເປັນ, ໃນເມື່ອບຸກຄົນໃດໜຶ່ງ ຜູ້ທີ່ໄດ້ຮັບເອົາ, ເກັບກັກ, ສະໜອງ, ຫລື ໄດ້ເອົາບຸກຄົນ ໃດໜຶ່ງ ໂດຍການໃຊ້ກຳລັງ, ຫລອກລວງ, ຫລື ຂົ່ມຂູ່ ເພື່ອຈຸດປະສົງ ຂອງ ການເອົາບຸກຄົນນັ້ນ ໃຫ້ເປັນທາດຮັບໃຊ້ຕົນ ໂດຍຄວາມບໍ່ສະຫມັກໃຈ, ໃຫ້ໃຊ້ແຮງງານແບບບັງຄັບ, ຫລື ຄ້າປະເວນີ ພຽງພໍສຳລັບ ຄຳວ່າ ຜູ້ປະສົບເຄາະຮ້າຍ ຈາກການຄ້າມະນຸດ.

### ບັນດາຮູບແບບຕົ້ນຕໍ ຂອງ ການຄ້າມະນຸດ

### ແຮງງານແບບບັງຄັບ

ການໃຊ້ແຮງງານແບບບັງຄັບ ທີ່ເຫັນໄດ້ປະຈັກຕາກວ່າຫມູ່ ທີ່ເກີດຂຶ້ນ ດັ່ງທີ່ ຜູ້ໃຊ້ແຮງງານ ທີ່ອະທຳ ອາໄສຊ່ອງຫວ່າງ ຂອງ ການບັງຄັບປະຕິບັດກົດຫມາຍ ເພື່ອສວຍໂອກາດ ກອບໂກຍລາຍໄດ້ ຈາກກຳມະກອນທີ່ບໍ່ມີທາງປົກປ້ອງຕົວເອງ. ກຳມະກອນເຫລົ່ານີ້ ຖືກເຮັດໃຫ້ເປັນ ຜູ້ທີ່ບໍ່ມີທາງ ປ້ອງກັນຕົນເອງຕ້ານກັບການຖືກບັງຄັບໃຫ້ອອກແຮງງານ ໃນພາກປະຕິບັດຕົວຈິງ ຍ້ອນການ ຫວ່າງງານ, ຄວາມທຸກຈົນ, ອາດສະຍາກຳ, ການຖືກຈຳແນກ, ການສໍ້ລາດບັງຫລວງ, ຂໍ້ຂັດແຍ່ງ ທາງການເມືອງ, ແລະ ການຍອມຮັບດ້ານວັດທະນະທຳ ຂອງ ໃນພາກປະຕິບັດຕົວຈິງ. ຜູ້ເຂົ້າເມືອງ ໂດຍສະເພາະ ທີ່ມາຈາກປະເທດອື່ນ ມັກຈະຖືກຕົກຢູ່ໃນທ່າບໍ່ມີທາງສູ້, ແຕ່ບຸກຄົນເຫລົ່ານັ້ນ ກໍຍັງຖືກບັງຄັບໃຫ້ຕົກຢູ່ໃນສະພາບນີ້ ໃນປະເທດ ຂອງ ຕົນເອງນຳອີກ. ຜູ້ປະສົບເຄາະຮ້າຍເພດຍິງ ຂອງ ແຮງງານແບບບັງຄັບ ຫລື ເຮັດວຽກໃຊ້ຫນີ້, ໂດຍສະເພາະຜູ້ຍິງ ແລະ ເດັກຍິງ ໃນການເປັນ ຄົນຮັບໃຊ້ໃນເຮືອນ, ຊໍ້າຍັງຖືກຂູດຮີດທາງເພດເປັນປະຈຳ. ແຮງງານແບບບັງຄົບ ແມ່ນຮູບແບບ ໜຶ່ງ ຂອງການຄ້າມະນຸດ ທີ່ເປັນການຍາກກວ່າ ທີ່ຈະພິສູດໄດ້ ແລະ ຄາດຄະເນໄດ້ ທຽບໃສ່ ການຄ້າມະນຸດ ໃນທາງເພດ. ມັນອາດຈະບໍ່ກ່ຽວຂ້ອງກັບເຄືອຂ່າຍ ອາດສະຍາກຳດຽວກັນ ທີ່ໄດ້ປະ ໂຫຍດ ຈາກການຄ້າມະນຸດທາງເພດຂ້າມຊາດ, ແຕ່ແທນທີ່ຈະເປັນເຊັ່ນນັ້ນ ມັນອາດ ກ່ຽວຂ້ອງກັບ ບຸກຄົນ ຜູ້ທີ່ເປັນເປົ້າຫມາຍຢູ່ທີ່ໃດກໍໄດ້ ຈາກກຳມະກອນໜຶ່ງຄົນ ໄປຈົນເຖິງຮ້ອຍໆຄົນ ໄປເປັນ ຄົນໃຊ້ໂດຍບໍ່ສະຫມັກໃຈ, ອາດເປັນເພາະ ໂດຍຜ່ານການບັງຄັບ ຫລື ການຂົ່ມຂູ່ຈາກການເຮັດວຽກ ໃນຄົວເຮືອນ ຫລື ວຽກຢູ່ໂຮງງານ.

## ແຮງງານທີ່ຖືກຜູກມັດ

ຮູບການໜຶ່ງ ຂອງ ການບັງຄັບ ຫລື ການຂົ່ມຂູ່ ການນຳໃຊ້ ການຜູກມັດ, ຫລື ໜີ້ສິນ, ເພື່ອຮັກສາບຸກຄົນນັ້ນ ໃຫ້ຢູ່ພາຍໃຕ້ ການບັງຄັບບັນຊາ ຂອງ ຕົນ. ເຫດການນີ້ຖືກອ້າງເຖິງໃນທາງ ກົດໝາຍ ແລະ ນະໂຍບາຍ ວ່າເປັນ “ແຮງງານທີ່ຖືກຜູກມັດ” ຫລື “ການຖືກຜູກມັດດ້ວຍໜີ້ສິນ.” ມັນຖືກຈັດໃຫ້ເປັນອາດສະຍາກຳໜຶ່ງ ພາຍໃຕ້ກົດໝາຍ ສະຫະລັດ ແລະ ໄດ້ລວມເອົາຮູບແບບ ຂອງ ຂູດຮີດ ທີ່ກ່ຽວຂ້ອງກັບ ການຄ້າມະນຸດ ຢູ່ໃນອະນຸສັນຍາ ຂອງ ອົງການສະຫະປະຊາຊາດ. ຜູ້ອອກແຮງງານຫລາຍຄົນ ຢູ່ທົ່ວໂລກ ຕົກເປັນເຫຍື່ອ ຂອງ ການຖືກຜູກມັດດ້ວຍໜີ້ສິນ ເວລາ ຜູ້ຄ້າມະນຸດ ຫລື ຜູ້ຈັດຫາຄົນມາເຮັດວຽກ ສວຍໂອກາດຂູດຮີດ ໜີ້ສິນໃນເບື້ອງຕົ້ນ ຂອງ ຜູ້ອອກແຮງງານ ໂດຍໄດ້ຖືວ່າ ເປັນສ່ວນໜຶ່ງ ຂອງ ບັນດາຂໍ້ກຳນົດ ຂອງ ການວ່າຈ້າງງານ, ຫລື ເວລາຜູ້ອອກແຮງງານ ສືບທອດໜີ້ສິນ ໃນລະບົບທີ່ໃກ້ກັບປະເພນີ ຂອງ ຜູ້ອອກແຮງງານ ທີ່ຖືກຜູກມັດຫລາຍກວ່າ. ຜູ້ອອກແຮງງານ ທີ່ຖືກຜູກມັດ ແບບປະເພນີ ຢູ່ອາຊີໃຕ້ ຕົກເປັນແອກ ຂອງ ຄົນຈຳນວນຫລວງຫລາຍ ຈາກລຸ້ນສູ່ລຸ້ນ.

## ການຖືກຜູກມັດດ້ວຍໜີ້ສິນແລະ ລະຫວ່າງ ແຮງງານຕ່າງດ້າວ

ຄວາມບໍ່ສາມາດປ້ອງກັນຕົວ ຂອງ ແຮງງານຕ່າງດ້າວ ຕໍ່ຂະບວນການຄ້າມະນຸດ ເປັນການລົບກວນ ໂດຍສະເພາະ ຍ້ອນວ່າປະຊາກອນເຫລົ່ານີ້ ກໍມີຈຳນວນຫລວງຫລາຍ ໃຊບາງຂົງເຂດ. ອົງປະກອບ ທີ່ເປັນແນວໂນ້ມນີ້ ສາມາດມອງເຫັນໄດ້: 1) ການສວຍໃຊ້ສັນຍາໄປໃນທາງທີ່ຜິດ; 2) ກົດໝາຍ ທ້ອງຖິ່ນບໍ່ພຽງພໍ ໃນການບໍລິຫານ ການວ່າຈ້າງງານ ແລະ ການຮັບເອົາແຮງງານຕ່າງດ້າວເຂົ້າ ເຮັດວຽກ; ແລະ 3) ການລົງໂທດໃນລະດັບສາກົນ ຂອງ ການຂູດຮີດ ແລະ ມັກຈະເຫັນຄ່າໃຊ້ຈ່າຍທີ່ ຜິດກົດໝາຍ ແລະ ໜີ້ສິນ ທີ່ມີຕໍ່ແຮງງານເຫລົ່ານີ້ ໃນປະເທດ ຫລື ລັດຕົ້ນທາງ, ມັກຈະເລີ່ມຕົ້ນ ດ້ວຍ ການເຂົ້າໄປກ່ຽວຂ້ອງໃນອາດສະຍາກຳ ແລະ/ຫລື ການຊ່ວຍໜູນ ຂອງ ອົງການແຮງງານແລະ ນາຍຈ້າງ ໃນປະເທດ ຫລື ລັດປາຍທາງ.

ບາງການສວຍໃຊ້ສັນຍາໄປໃນທາງທີ່ຜິດ ແລະ ເງື່ອນໄຂທີ່ເປັນອັນຕະລາຍຕໍ່ສຸຂະພາບ ຂອງ ການຈ້າງງານ ໃນຕົວມັນເອງແລ້ວ ບໍ່ໄດ້ປະກອບສ້າງເປັນ ການຮັບໃຊ້ໂດຍບໍ່ສະໝັກໃຈ, ແມ້ວ່າ ການໃຊ້ກຳລັງທາງຮ່າງກາຍ ຫລື ການຂົ່ມຂູ່ ຫລື ການໜ່ວງໜ່ຽວ ເພື່ອເກນກຳມະກອນຄົນໜຶ່ງ ເຂົ້າໄປ ຫລື ສືບຕໍ່ອອກແຮງງານ ຫລື ບໍລິການ ອາດຫັນປ່ຽນສະຖານະການ ໄປເປັນໜຶ່ງໃນບັນດາ ແຮງງານແບບບັງຄັບ. ຄ່າໃຊ້ຈ່າຍທີ່ວາງໃສ່ຜູ້ອອກແຮງງານ ເພື່ອ “ອະພິສິດ” ຂອງ ການເຮັດວຽກ ຢູ່ຕ່າງປະເທດ ສາມາດປັກດັນໃຫ້ແຮງງານ ໃຫ້ຕົກຢູ່ໃນສະພາບການ ທີ່ມີຄວາມສ່ຽງສູງ ຕໍ່ການ ຖືກຜູກມັດດ້ວຍໜີ້ສິນ. ເຖິງຢ່າງໃດກໍຕາມ, ຄ່າໃຊ້ຈ່າຍເຫລົ່ານີ້ ຢ່າງດຽວ ບໍ່ສາມາດ ປະກອບສ້າງ

ເປັນການຜູກມັດດ້ວຍໜີ້ສິນ ຫລື ເປັນການຮັບໃຊ້ໂດຍຄວາມບໍ່ສະໝັກໃຈໄດ້. ເວລາທີ່ໄດ້ຄວບເຂົ້າກັນກັບ ການກົດຂີ່ຂູດຮີດ ຕົວແທນແຮງງານ ຫລື ນາຍຈ້າງ ທີ່ໄຮ້ຄຸນນະທຳ ໃນປະເທດປາຍ ທາງ, ຄ່າໃຊ້ຈ່າຍເຫລົ່ານີ້ ຫລື ໜີ້ສິນເຫລົ່ານີ້, ເວລາທີ່ມັນເກີນທຶນ, ມັນກໍກາຍເປັນຮູບແບບໜຶ່ງ ຂອງການຖືກຜູກມັດດ້ວຍໜີ້ສິນ.

**ການເປັນຄົນຮັບໃຊ້ໃນຄົວເຮືອນແບບບໍ່ສະໝັກໃຈ**

ຄົນເຮັດວຽກໃນເຮືອນ ອາດຖືກຕົກເຂົ້າໄປໃນກັບດັກ ແຫ່ງການເປັນທາດຮັບໃຊ້ ໂດຍຜ່ານການນຳໃຊ້ກຳລັງ ຫລື ການຂົ່ມຂູ່, ເຊັ່ນການກະທຳໃນທາງທີ່ບໍ່ຖືກຕ້ອງທາງຮ່າງກາຍ (ລວມທັງ ທາງເພດ) ຫລື ການກະທຳທີ່ບໍ່ຖືກຕ້ອງທາງຈິດໃຈ. ໂດຍສະເພາະ ເດັກນ້ອຍເປັນຜູ້ທີ່ມີຄວາມສ່ຽງ ສູງກວ່າໝູ່. ການເປັນທາດຮັບໃຊ້ໃນຄົວເຮືອນເປັນຕົ້ນ ມັນຍາກທີ່ຈະກວດຈັບໄດ້ ຍ້ອນວ່າມັນ ເກີດຂຶ້ນໃນເຮືອນສ່ວນຕົວ, ຊຶ່ງມັກຈະບໍ່ມີຂໍ້ກຳນົດ ຂອງ ອຳນາດການປົກຄອງ. ຍົກຕົວຢ່າງ, ມັນມີຄວາມຕ້ອງການຢ່າງສູງ ໃນບາງປະເທດທີ່ຮັ່ງມີ ໃນອາຊີ ແລະ ຕາເວັນອອກກາງ ໃນການຊອກຫາຄົນຮັບໃຊ້ ຜູ້ທີ່ຕົກເປັນຜູ້ປະສົບເຄາະຮ້າຍ ຕໍ່ເງື່ອນໄຂຕ່າງໆ ຂອງ ການເປັນຜູ້ຮັບໃຊ້ທີ່ບໍ່ໄດ້ມີຄວາມສະໝັກໃຈ.

**ແຮງງານເດັກແບບບັງຄັບ**

ບັນດາອົງການຈັດຕັ້ງສາກົນເກືອບທັງໝົດ ແລະ ກົດໝາຍພາຍໃນປະເທດ ຮັບຮູ້ວ່າ ເດັກນ້ອຍອາດເຮັດວຽກໄດ້ຢ່າງຖືກຕ້ອງຕາມກົດໝາຍ. ກົງກັນຂ້າມ, ຮູບແບບ ຂອງ ແຮງງານເດັກທີ່ຮ້າຍແຮງທີ່ສຸດ ກຳລັງຕົກເປັນເປົ້າ ໃນການລົບລ້າງ ໂດຍນາໆຊາດທົ່ວໂລກ. ການຂາຍ ແລະ ການຄ້າ ເດັກ ແລະ ການຖືກຕີກັບ ຂອງ ພວກເຂົາ ໃນຮູບແບບ ຂອງ ແຮງງານທີ່ຖືກຜູກມັດ້ວຍໜີ້ສິນ ແລະ ແຮງງານແບບບັງຄັບ ທັນເຫັນໄດ້ຢ່າງຈະແຈ້ງ ຢູ່ໃນບັນດາ ຮູບແບບ ຂອງແຮງງານເດັກທີ່ຮ້າຍແຮງທີ່ສຸດ. ເດັກນ້ອນຄົນໃດຄົນໜຶ່ງ ຜູ້ທີ່ຕົກຢູ່ໃນອຳນາດແຫ່ງການເປັນຄົນຮັບໃຊ້ແບບບໍ່ສະໝັກໃຈ, ມີຂໍ້ຜູກມັດດ້ານໜີ້ສິນ, ເປັນຄົນຮັບໃຊ້, ຫລື ເປັນຂ້າທາດ ເຖິງແມ່ນວ່າ ການນຳໃຊ້ກຳລັງ, ການຫລອກລວງ, ຫລື ການຂົ່ມຂູ່ ແມ່ນຜູ້ປະສົບເຄາະຮ້າຍ ຂອງ ການຄ້າມະນຸດ ໂດຍບໍ່ຈຳແນກວ່າ ສະຖານທີ່ ຂອງ ການຂູດຮີດນັ້ນຈະຢູ່ໃສ.

**ທະຫານເດັກ**

ການເປັນທະຫານເດັກ ແມ່ນເປັນເອກະລັກ ແລະ ເປັນການສະແດງອອກຢ່າງໂຫດຮ້າຍທາລຸນ ທີ່ສຸດ ຂອງ ການຄ້າມະນຸດ ທີ່ກ່ຽວຂ້ອງກັບ ການເກັບເກນເດັກນ້ອຍໄປເປັນທະຫານແບບບັງຄັບ

ໂດຍໃຊ້ກຳລັງ, ການຫລອກລວງ, ຫລື ການຂົ່ມຂູ່ ເພື່ອຂູດຮີດ ແຮງງານ ຂອງ ພວກເຂົາເຈົ້າ ຫລື ໄປທາລຸນແບບເປັນທາດທາງເພດ ໃນບໍລິເວນທີ່ມີຂໍ້ຂັດແຍ່ງ. ການປະຕິບັດທີ່ຜິດກົດຫມາຍນັ້ນ ກຳລັງປະກອບອາວຸດ ຂອງ ລັດຖະບານ, ອົງການຈັດຕັ້ງແບບເຄິ່ງທະຫານ ຫລື ກຸ່ມກະບົດ ອາດກະທຳຄວາມຜິດ. ອົງການຢູນິເຊັບ ຄາດຄະເນວ່າມີເດັກນ້ອຍຫລາຍກວ່າ 300,000 ຄົນ ທີ່ຕ່ຳກວ່າ 18 ປີ ກຳລັງຖືກຂູດຮີດຢູ່ ໃນການຂັດແຍ່ງທາງອາວຸດໃນຫລາຍກວ່າ 30 ແຫ່ງທົ່ວໂລກ. ໃນເວລາທີ່ເດັກທີ່ເປັນທະຫານສ່ວນຫລາຍ ມີອາຍຸພຽງແຕ່ລະຫວ່າງ 15 ເຖິງ 18ປີ ເທົ່ານັ້ນ, ບາງຄົນກໍຍັງນ້ອຍກວ່ານັ້ນປະມານ 7 ຫລື 8 ປີ ເທົ່ານັ້ນ.

ເດັກນ້ອຍຫລາຍຄົນ ຖືກລັກພາຕົວ ເພື່ອໃຊ້ເປັນນັກຕໍ່ສູ້. ສ່ວນທີ່ເຫລືອກໍ່ຖືກເຮັດໃຫ້ເປັນຄົນຮັບໃຊ້ ເສີບເຫລົ້າເສີບເບຍ, ຄົນຄົວກິນ, ນາຍຍາມ, ຄົນຮັບໃຊ້, ຄົນສົ່ງຫນັງສື, ຫລື ເປັນນັກສືບສອດແນມ ທີ່ຜິດກົດຫມາຍ. ເດັກນ້ອຍຜູ້ຍິງຫລາຍຄົນ ຖືກບັງຄັບໃຫ້ແຕ່ງງານ ຫລື ຮ່ວມເພດກັບນັກຕໍ່ສູ້ຜູ້ຊາຍ ແລະ ມີຄວາມສ່ຽງສູງຕໍ່ການຖືພາແບບບໍ່ຕ້ອງການ. ທະຫານເດັກທັງຍິງ ແລະ ຊາຍ ມັກຈະຖືກ ສວຍໃຊ້ໃນທາງເພດໄປໃນທາງທີ່ຜິດ ແລະ ມີຄວາມສ່ຽງສູງຕໍ່ການຕິດພະຍາດຕິດຕໍ່ທາງເພດ ສຳພັນ.

ເດັກນ້ອຍບາງຄົນ ຖືກບັງຄັບໃຫ້ກະທຳ ເລວຊາມ ຕ້ານກັບຄອບຄົວ ແລະ ຊຸມຊົນ ຂອງ ຕົນເອງ. ທະຫານເດັກມັກຕໍຈະຖືກຂ້າຕາຍ ຫລື ຖືກບາດເຈັບ, ຜູ້ທີ່ລອດຊີວິດມັກຈະ ໄດ້ຮັບຄວາມເຈັບປວດ ຊອກຊ້ຳຢ່າງສາຫັດ ແລະ ມີຄວາມຫວາດກົວ. ການພັດທະນາສ່ວນບຸກຄົນ ຂອງ ພວກເຂົາເຈົ້າ ມັກຈະເປັນການພິການໄປຕະຫລອດຊີວິດ. ການສົ່ງທະຫານເດັກກັບຄືນບ້ານ ມັກຈະຖືກປະຕິເສດ ຊຸມຊົນທີ່ເຂົາເຈົ້າຢູ່.

ທະຫານເດັກ ເປັນບັນຫາ ຂອງ ທົ່ວໂລກ. ບັນຫານີ້ແມ່ນວິກິດການທີ່ຮ້າຍແຮງທີ່ວຸດ ໃນອາຝຣິກກາ ແລະ ອາຊີ, ກຸມປະກອບອາວຸດ ໃນທະວີບອາເມຣິກາ ແລະ ຕາເວັນອອກກາງ ຍັງໃຊ້ເດັກນ້ອຍ ຢ່າງຜິດກົດຫມາຍຢູ່ ໃນບາງຂົງເຂດ. ທຸກຊາດຕ້ອງເຮັດວຽກຮ່ວມກັນ ກັບບັນດາອົງການຈັດຕັ້ງ ສາກົນ ແລະ ອົງການຈັດຕັ້ງບໍ່ຂຶ້ນກັບລັດຖະບານ ເພື່ອກະທຳການຢ່າງເລັ່ງດ່ວນ ເພື່ອປິດອາວຸດ, ຢຸດຕິການເຄື່ອນຍ້າຍ, ແລະ ນຳເອົາເດັກກັບຄືນສູ່ຊຸມຊົນ.

**ການຄ້າມະນຸດໃຫ້ໄປບໍລິການທາງເພດ ແລະ ເປັນໂສເພນີ**

**ການຄ້າມະນຸດໃຫ້ໄປບໍລິການທາງເພດ** ປະກອບເປັນສ່ວນທີ່ສຳຄັນ ຂອງ ການຄ້າມະນຸດ ໂດຍລວມ ແລະ ສ່ວນໃຫຍ່ ຂອງ ການເປັນຂ້າທາດຂ້າມຊາດແບບໃຫມ່. **ການຄ້າມະນຸດໃຫ້ໄປ** ບໍລິການທາງເພດ ຈະບໍ່ເກີດມີຂຶ້ນ ໂດຍປາສະຈາກຄວາມຕ້ອງການ ສຳລັບການບໍລິການທາງເພດ ເພື່ອການຄ້າ ທີ່ກຳລັງເຟື້ອງຟູ ຢູ່ທົ່ວໂລກດອກ. ລັດຖະບານສະຫະລັດ ຮັບຮອງເອົາ ການຕັດສິນໃຈ ດ້ານນະໂຍບາຍ ກ່ຽວກັບ ຈຸດຢືນທີ່ ແຂງແກ່ນ ຕ້ານກັບການເປັນໂສເພນີ ໃນເດືອນທັນວາ 2002,

ຊຶ່ງຮັບຮູ້ວ່າ ການເປັນໂສເພນີ ແມ່ນການເສື່ອມເສຍ ແລະ ໄຮ້ມະນຸດສະທຳ ໂດຍສັນດານ ແລະ ເປັນເຊື້ອເພີງໃຫ້ແກ່ ການຄ້າມະນຸດ. ການຫັນເອົາມະນຸດໄປເປັນສິນຄ້າທີ່ໄຮ້ມະນຸດສະທຳ ໄດ້ສ້າງ ສະພາບແວດລ້ອມ ໃຫ້ແກ່ການຄ້າມະນຸດ.

ລັດຖະບານສະຫະລັດ ຄັດຄ້ານການເປັນໂສເພນີ ແລະ ບັນດາກິດຈະກຳອື່ນໆ ທີ່ກ່ຽວຂ້ອງ, ລວມທັງການເປັນແມ່ໂປ່, ແມ່ສື່, ຫລື ມີໂຮງໂສເພນີ ເປັນອັນປະກອບສ່ວນໃຫ້ແກ່ ປະກົດການ ຂອງ ການຄ້າມະນຸດ, ແລະ ຢືນຢັນວ່າ ບັນດາກິດຈະກຳເຫລົ່ານີ້ ບໍ່ຄວນຈະໄດ້ຮັບການກຳນົດ ໃຫ້ເປັນຮູບແບບ ຂອງ ວຽກທີ່ຖືກກົດຫມາຍ ສຳລັບມະນຸດຊາດ. ຜູ້ທີ່ອຸດຫນູນເກື້ອກູນ ອຸດສາ ຫະກຳບໍລິການທາງເພດ ກໍ່ໃຫ້ເກີດເປັນຄວາມຕ້ອງການ ທີ່ພວກຄ້າມະນຸດ ສະແຫວງຫາເພື່ອ ຄວາມພໍໃຈ.

**ການສະແຫວງຫາປະໂຫຍດຈາກເດັກນ້ອຍ ທີ່ໃຫ້ບໍລິການທາງເພດໃນທາງການຄ້າ**

ແຕ່ລະປີ, ມີເດັກນ້ອຍຫລາຍກວ່າ 2 ລ້ານຄົນ ຖືກສວຍໃຊ້ເພື່ອປະໂຫຍດສ່ວນຕົວ ໃນການຄ້າ ບໍລິການ ທາງເພດຢູ່ທົ່ວໂລກ. ມີເດັກນ້ອຍຫລາຍໆຄົນໃນຈຳນວນນັ້ນ ຕົກເປັນເຫຍື່ອ ຂອງ ການເປັນໂສເພນີ. ການກອບໂກຍຜົນປະໂຫຍດ ຈາກການຄ້າບໍລິການທາງເພດ ຂອງ ເດັກ ແມ່ນການຄ້າມະນຸດ, ໂດຍບໍ່ຈຳເປັນຈະຕ້ອງມີອົງປະກອບ ຂອງ ສະພາບການກຳໄດ້. ສົນທິສັນຍາ ແລະ ອະນຸສັນຍາສະກົນ ມີພັນທະກຳນົດເອົາ ການກອບໂກຍຜົນປະໂຫຍດ ຈາກການຄ້າ ບໍລິການ ທາງເພດ ຂອງ ເດັກ ໃຫ້ເປັນການກະທຳຜິດທາງອາຍາ. ການນຳໃຊ້ເດັກ ໃນການຄ້າບໍລິການ ທາງເພດ ເພື່ອຈຸດປະສົງທາງການຄ້າ ແມ່ນຖືກເກືອດຫ້າມ ທັງຕາມກົດຫມາຍສະຫະລັດ ແລະ ອະນຸສັນຍາ ຂອງ ອົງການສະຫະປະຊາຊາດ ກ່ຽວກັບ ການຕ້ານກັບ ການຄ້າມະນຸດ. ມັນບໍ່ສາມາດ ມີຂໍ້ຍົກເວັ້ນໃດ, ວັດທະນາທຳໃດ ຫລື ເຫດຜົນທາງເສດຖະກິດ-ສັງຄົມໃດ ທີ່ສະກັດກັ້ນ ການກອບ ກູ້ເອົາເດັກ ໃຫ້ອອກຈາກການເປັນທາດຮັບໃຊ້ທາງເພດ. ການກຳນົດຄຳວ່າ “ກຳມະກອນ ທາງເພດ ເດັກ” ແມ່ນຍອມຮັບບໍ່ໄດ້ ຍ້ອນວ່າ ມັນເຮັດໃຫ້ ຄວາມໂຫດຮ້າຍສາມານ ຂອງ ການກອບໂກຍ ຜົນປະໂຫຍດນີ້ ໃຫ້ມັນຂາວສະອາດແບບຜິດໆ.

**ການທ່ອງທ່ຽວເພື່ອການບໍລິການທາງເພດກັບເດັກ**

**ການທ່ອງທ່ຽວເພື່ອການບໍລິການທາງເພດກັບເດັກ** ກ່ຽວຂ້ອງກັບຄົນທີ່ເດີນທາງ ຈາກປະເທດ ຂອງຕົນ—ມັກຈະເປັນປະເທດທີ່ ກຳນົດໃຫ້ ການສະແຫວງຫາຜົນປະໂຫຍດທາງເພດເດັກເປັນການ ຜິດກົດຫມາຍ ຫລື ເປັນທີ່ກຽດຊັງໃນວັດທະນະທຳ ຂອງ ເຂົາເຈົ້າ—ໄປຍັງປະເທດອື່ນ ທີ່ພວກເຂົາ ສາມາດມີການກະທຳທາງເພດກັບເດັກ ເພື່ອຜົນປະໂຫຍດທາງການຄ້າ. ການທ່ອງທ່ຽວເພື່ອການ ບໍລິການທາງເພດກັບເດັກ ເປັນການທຳຮ້າຍກຽດສັກສີ ຂອງ ເດັກທີ່ເປັນຫນ້າອັບອາຍ ແລະ

ເປັນຮູບແບບ ຂອງ ການກະທຳຄວາມບໍ່ຖືກຕ້ອງແບບຮຸນແຮງຕໍ່ເດັກ. ການກະທຳທາງເພດກັບເດັກເພື່ອຜົນປະໂຫຍດທາງການຄ້າ ເປັນຜົນສືບເນື່ອງ ຂອງ ຄວາມຫາຍຍະນະ ທີ່ມີຕໍ່ຜູ້ເປັນເດັກນ້ອຍ, ຊຶ່ງອາດຈະລວມທັງ ການເຈັບປວດທາງດ້ານຮ່າງກາຍ ແລະ ຈິດໃຈອັນຍາວນານ, ຕິດໂລກພະຍາດ (ລວມທັງ ໂລກ ເອດສ), ການຕິດຢາເສບຕິດ, ການຖືພາແບບບໍ່ຕ້ອງການ, ການຂາດອາຫານ, ການຕັດແຍກອອກຈາກສັງຄົມ, ແລະ ອາດເຖິງແກ່ຄວາມຕາມ.

ນັກທ່ອງທ່ຽວ ທີ່ມີການກ່ຽວຂ້ອງກັບ ການທ່ອງທ່ຽວເພື່ອການບໍລິການທາງເພດກັບເດັກ ມັກຈະເດີນທາງຈາກປະເທດກຳລັງພັດທະນາ ເພື່ອຊອກຫາຜູ້ບໍ່ປະສີງອອກນາມ ແລະ ການມີພ້ອມໄວ້ ຂອງ ໂສເພນີເດັກ. ອາດສະຍາກຳມັກຈະເປັນເຊື້ອເພີງໂດຍສະເພາະຄວາມອ່ອນແອ ຂອງ ການບັງຄັບປະຕິບັດກົດຫມາຍ, ການສໍ້ລາດບັງຫລວງ, ອິນເຕີແນັດ, ການໄປມາທີ່ງ່າຍດາຍ, ແລະ ຄວາມທຸກຈົນ. ຜູ້ກະທຳຜິດທາງເພດ ມາຈາກທຸກພື້ນຖານທາງເສດຖະກິດ-ສັງຄົມ ແລະ ໃນບາງກໍລະນີ ກໍມີຕຳແຫນ່ງທີ່ຫນ້າໄວ້ເນື້ອເຊື່ອໃຈ. ບັນດາກໍລະນີ ຂອງ ການທ່ອງທ່ຽວຫາການບໍລິການທາງເພດເດັກ ກ່ຽວຂ້ອງກັບ ຄົນອາເມຣິກາ ລວມທັງ ຜູ້ຊ່ຽວຊານດ້ານພະຍາດເດັກ, ນາຍຫມວດທະຫານບຳນານ, ທັນຕະແພດ, ແລະ ສາດສະດາຈານມະຫາວິທະຍາໄລ. ການທຳລາມົກອານາຈານເດັກ ມັກຈະກ່ຽວຂ້ອງກັບບັນດາກໍລະນີເຫລົ່ານີ້ເປັນປະຈຳ, ແລະ ຢາເສບຕິດ ອາດຍັງຖືກນຳໃຊ້ຕໍ່ ຜູ້ເປັນເດັກ ຢູ່ໃນຄວາມເອົາໃຈໃສ່ ຫລື ໃຕ້ການບັງຄັບບັນຊາ.

**ປະເທດລາວ (ລະດັບ 2)**

ປະເທດລາວແມ່ນເປັນປະເທດຕົ້ນໆທີ່ເປັນແຫລ່ງສຳລັບ,ຜູ້ຍິງ ແລະເດັກນອ້ຍທີ່ຖືກຄ້າປະເວນີ ແລະຄ້າແຮງງານ ເປັນແມ່ບ້ານ ທີເປັນກຳມະກອນຕາມໂຮງຈັກໂຮງງານຢູ່ໃນປະເທດໄທ. ຄົນລາວຜູ້ຊາຍ, ຜູ້ຍິງ, ແລະເດັກນ້ອຍທີ່ຍົກຍ້າຍໄປຢູ່ປະເທດໃກ້ຄຽງເພື່ອຊອກຫາເສດຖະກິດທີ່ດີກວ່ານັ້ນ ແຕພັດຕົກຢູ່ໃນສະພາບຖືກບັງຄັບ ຫຼື ຜູກມັດໃຫ້ໃຊ້ແຮງງານ ຫຼື ບັງຄັບໃຫ້ຄ້າປະເວນີເມື່ອມາເຖິງ ປະເທດດັ່ງກ່າວຊາຍລາວຈຳນວນໜຶ່ງທີ່ຍົກຍ້າຍໄປປະເທດໄທ ພວກເຂົາຕົກຢູ່ໃນສະພາບບໍລິການແບບບໍ່ພໍໃຈຂອງຊາວປະມົງໄທ ແລະໂຮງງານອຸດສະຫະກຳ. ປະເທດລາວຍັງເປັນທາງຜ່ານທີ່ບໍ່ກ້ວາງຂວາງປານໃດ ສຳລັບຜູ້ຍິງຊາວຫວຽດນາມ, ຊາວຈີນ ແລະຊາວພະມ້າໄປຍັງປະເທດໄທ. ລາວສາມາດເປັນປະເທດທາງຜ່ານຖະໜົນຫຼວງຖືກສ້າງຂື້ນເຊື່ອມຕໍ່ກັບສາທາລະນະລັດປະຊາຊົນຈີນ, ຫວຽດນາມ, ປະເທດໄທແລະກຳປູຊາໂດຍຜ່ານລາວ ການຄ້າມະນຸດພາຍໃນປະທດມີບັນຫາສິ່ງຜົນສະທ້ອນເຖິງຜູ້ຍິງແລະຍິງສາວທີ່ຢູ່ຊົນນະບົດຫ່າງໄກສອກຫຼີກເກີດມີການຄ້າປະເວນີ.

ລັດທະບານລາວຍັງດຳເນີນການເພື່ອລຶບລ້າງການຄ້າມະນຸດບໍ່ໃດ້ຕາມມາດຕະຖານຂັ້ນຕ່ຳ, ແນວໃດກໍຕາມ ລັດທະບານລາວກໍ່ສະແດງຄວາມພະຍາມທີ່ຈະແກ້ໄຂບັນຫາດັ່ງກ່າວ. ລັດຖະບານລາວໃດ້ເພີ້ມຄວາມພະຍາຍາມໃນການໃຊ້ກົດໝາຍບັງຄັບຕໍ່ຜູ້ຄ້າມະນຸດ ແລະດຳເນີນຄະດີແລະລົງ

ໂທດຕໍ່ຜູ້ກະທຳຜິດດັ່ງກ່າວ.ລັດຖະບານລາວໄດ້ເພີ້ມຄວາມຮ່ວມມືກັບອົງການສາກົນແລະພະນັກງານລັດຖະກອນເພື່ອຈັດການຝຶກອົບຮົມໃຫ້ລັດຖະກອນແລະເຈົ້າໜ້າທີ່ຜູ້ທີ່ປະຕິບັດກົດໝາຍ,ນຳເອົາຜູ້ຖືກເຄາະຮ້າຍທີຖືກສົ່ງກັບປະເທດມາລວມຕົວເຂົ້າກັນເປັນອັນໜຶ່ງອັນດຽວແລ້ວລົມະລົງຕາມສາທາລະນະຕ່າງໆເພື່ອຕໍ່ຕ້ານການຄ້າມະນຸດ.ຍັງຂາດທຶນຮອນເຊິ່ງເປັນສິ່ງກີດຂວາງອັນໃຫ່ຍຫລວງໃຫ້ແກ່ຄວາມອາດສາມາດຂອງລັດຖະບານໃນການຕໍ່ຕ້ານການຄ້າມະນຸດແລະຮຽກຮ້ອງໃຫ້ອົງການຈັດຕັ້ງສາກົນເພື່ອໃຫ້ທຶນຊ່ວຍໃນການປະຕິບັດ ໜ້າທີ່ວຽກງານເພື່ອຕໍ່ຕ້ານຄ້າມະນຸດ.

**ຄຳແນະນຳສຳລັບ ປະເທດລາວ:**

ເພີ້ມທະວີຄວາມພະຍາຍາມໃນຕໍ່ຕ້ານການຄ້າມະນຸດພາຍໃນປະເທດແລະປັບປຸງການຮ່ວມມືກັບອົງການຈັດຕັ້ງສາກົນ ແລະລັດຖະກອນເພື່ອສ້າງພະລັງແຮງໃນການຕໍ່ຕ້ານກັບການຄ້າມະນຸດ.

**ການດຳເນີນຄະດີ:**

ລັດຖະບານລາວໄດ້ສະແດງຄວາມຄືບໜ້າໃນຄວາມພະຍາຍາມໃນການໃຊ້ກົດໝາຍບັງຄັບເພື່ອຕໍ່ຕ້ານການຄ້າມະນຸດແລະມີຄວາມຕັ້ງໃຈຮ່ວມກັບປະເທດຕ່າງໆເຊັ່ນດຽວກັບບັນດາອົງກອນອິດສະຫຼະ (NGO's) ແລະອົງການຈັດຕັ້ງສາກົນ. ປະເທດລາວຫ້າມທຸກຮູບແບບຂອງການຄ້າມະນຸດ ໂດຍອີງໃສ່ກົດໝາຍອາດຍາມາດຕາ 134, ວ່າດ້ວຍການກຳນົດການລົງໂທດຕໍ່ພວກຄ້າມະນຸດຢ່າງເອົາຈິງເອົາຈັງ ແລະຕໍ່ພວກຂົ່ມຂືນກະທຳຊຳເລົາກໍ່ເຊັ່ນດຽວກັນ.

ກະຊວງປ້ອງກັນຄວາມສະຫງົບສຸກໄດ້ນຳໃຊ້ມາດຕາ 134 ເພື່ອສືບສວນສອບສວນການຄ້າມະນຸດໃນ 38 ກໍລະນີ, ສົ່ງຜົນໃຫ້ມີການຈັບກຸມ 23 ຄົນ ແລະອີກ 8 ຄົນກຳລັງດຳເນີນຄະດີ, ຍັງອີກ 20 ກໍລະນີໃນປັດຈຸບັນແມ່ນຍັງຢູ່ພາຍໃຕ້ການສືບສວນສອບສວນຂອງເຈົ້າໜ້າທີ່. ຕຳຫຼວດຖືກຊື້ຈ້າງ, ຕຸລະການສານຍັງອ່ອນແອ ແລະປະຊາຊົນສ່ວນຫຼາຍຍັງບໍ່ເຂົ້າໃຈລະບົບສານມັນເປັນສິ່ງກີດຂວາງຄວາມພະຍາຍາມໃນການບັງຄັບໃຊ້ກົດໝາຍວ່າດວ້ຍການຕໍ່ຕ້ານການຄ້າມະນຸດຜ່ານການຊວ່ຍທາງດ້ານກົດໝາຍ, ອົງການສະພາທະນາຍຄວາມໄດ້ຊວ່ຍເຫຼືອຜູ້ທີ່ຖືກເຄາະຮ້າຍໂດຍໃຫ້ການສຶກສາຕໍ່ສາທາລະນະຊົນຢ່າງກ້ວາງຂວາງທາງດ້ານລະບົບກົດໝາຍ ແລະໃຫ້ໃຫ້ຄຳແນະນຳທາງດ້ານກົດໝາຍແກ່ຜູ້ທີ່ຖືກເຄາະຮ້າຍລ່ວງລະເມີດສິດທິມະນຸດ, ລວມທັງການຄ້າມະນຸດ. ການຊື້ຈ້າງຍັງມີໃຫ້ເຫັນຢູ່ໃນຖັນແຖວພະນັກງານລັດຖະກອນອາດມີສ່ວນຮ່ວມຫຼືເປັນເຄືອຄ່າຍໃຫ້ແກ່ພວກຄ້າມະນຸດ, ຄ້າຢາເສບຕິດ, ສັດປ່າ ແລະຄ້າໄມ້ທ່ອນຜິດກົດໝາຍ. ບໍ່ມີລັດຖະກອນຫຼືເຈົ້າໜ້າທີ່ຜູ້ບັງຄັບໃຊ້ກົດໝາຍຄົນໃດຖືກວິໃນຫຼືລົງໂທດຕໍ່ຜູ້ມີສ່ວນຮ່ວມໃນຂະບວນການຄ້າມະນຸດ. ລັດຖະບານລາວໄດ້ເຮັດວຽກອົງການຈັດຕັ້ງສາກົນແລະລັດຖະກອນເພື່ອເພີ້ມທະວີຄວາມເຂັ້ມແຂງໃນການບັງຄັບໃຊ້ກົດໝາຍໂດຍຜ່ານການເຝິກອົບຮົມ ໃຫ້ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ສືບສວນສອບສວນ, ເຈົ້າໜ້າທີ່ດຳເນີນຄະດີ ແລະເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ຊາຍແດນ.

**ການປົກປ້ອງ**

ລັດທະບານລາວໄດ້ສະແດງເຖິງຄວາມຄືບໜ້າໃນການຍົກລະດັບການປົກປ້ອງເຢື່ອຜູ້ເຄາະຮ້າຍຈາກ ການ ຄ້າມະນຸດ ໃນປີຜ່ານມາ. ກະຊວງແຮງງານແລະສະຫວັດດີການສັງຄົມແລະພະແນກ ກວດຄົນເຂົ້າເມືອງ ຮ່ວມກັບອົງການເພື່ອຊາວອົບພະຍົບ (IOM), (UNIAP) ແລະອົງການບໍ່ຂື້ນກັບລັດຖະບານທ້ອງຖິ່ນໄດ້ໃຫ້ການຊວ່ຍເຫຼືອແກ່ຜູ້ຖືກເຄາະຮ້າຍ. ກະຊວງແຮງງານແລະສະຫວັດດີການສັງຄົມໄດ້ສືບຕໍ່ເປີດສູນພັກເຊົາຊົ່ວຄາວແຫ່ງໜຶ່ງຢູ່ທີ່ ນະຄອນຫຼວງວຽງຈັນ. ເຢື່ອຜູ້ເຄາະຮ້າຍທີ່ບໍ່ຢາກກັບຄືນບ້ານເດີມທາງສະຫະພັນແມ່ຍິງລາວແລະ ອົງການບໍ່ຂື້ນກັບລັດຖະບານຢູ່ທ້ອງຖິ່ນຈະເປັນຜູ້ຈັດຫາທີ່ພັກເຊົາໄລຍະຍາວໃຫ້. ໃນຊຸມປີຜ່ານມາ, ຜູ້ເຄາະຮ້າຍທີ່ຖືກຄ້າມະນຸດຕາມສາຍແດນໄດ້ສົ່ງຈາກປະເທດໄທມາປະເທດລາວຢ່າງເປັນທາງການ ຈຳນວນ 280 ຄົນ. ແລະອີກ 21 ຄົນຖືກສົ່ງກັບມາໃນປີ 2008. ປະຈຸບັນຍັງມີຜູ້ທີ່ຖືກເຄາະຮ້າຍອາ ໃສຢູສູນຟື້ນພູຈິດໃຈຢູ່ປະເທດໄທປະມານ 100 ຄົນ. ລັດຖະບານລາວໄດ້ຈັດຫາຢາປົວພະຍາດໃຫ້, ໃຫ້ຄຳປືກສາ, ເຝິກອົບຮົມໃຫ້ແລະຈັດຫາວຽກງານໃຫ້ຜູ້ທີ່ຖືກເຄາະຮ້າຍທີ່ຍັງອາໃສ ຢູ່ໃນສູນພັກເຊົາຊົ່ວຄາວທີ່ວຽງຈັນ ແລະຜູ້ທີ່ພັກເຊົາຢູ່ສູນສະພັນແມ່ຍິງລາວ.

ລັດຖະບານລາວໄດ້ເອົາໃຈໃສ່ຢ່າງຈິງຈັງຕໍ່ວຽກງານດັ່ງຊັກຊວນຜູ້ທີ່ຖືກເຄາະຮ້າຍເຂົ້າມີສ່ວນຮ່ວມໃນ ຂະບວນການສືບສວນສອບສວນແລະດຳເນີນຄະດີຕໍ່ຄ້າມະນຸດ. ໃນເດືອນ 1 ປີ 2007, ລັດຖະບານລາວສະກັດກັ້ນປະຊາຊົນບໍ່ໃຫ້ອອກນອກປະເທດ,ເພື່ອກຳຈັດຜູ້ທີ່ເຂົ້າເມືອງຜິດກົດ ໝາຍແລະເຢື່ອເຄາະຮ້າຍຈາກການຄ້າມະນຸດພາຍໃນປະເທດ,ໂດຍມີການປັບໄໝເມື່ອເຂົາເຈົ້າກັບມາ ບ້ານເກີດ.ລັດຖະບານລາວໄດ້ມີຄຳນຳໃນການຕໍ່ຕ້ານການປັບໃໝ,ແລະລົບລ້າງຂໍ້ປັບໄໝເຫຼົ່ານັ້ນ ຕາມົດໝາຍໂດຍພື້ນຖານ,ເຮັດໃຫ້ເຢື່ອຜູ້ເຄາະຮ້າຍຫຼຸດຜ່ອນການໃຊ້ຈ່າຍທາງດ້ານເງິນຢ່າງມີປະສິດ ທິຜົນ. ລັດຖະບານລາວຍັງໄດ້ຈັດຫາທີ່ດິນໃຫ້ອົງການທີ່ບໍຂື້ນກັບລັດຖະບານ (NGO's) ເພື່ອຈັດຫາທີ່ພັກເຊົາຊົ່ວຄາວໃຫ້ຜູ້ທີ່ຕົກເປັນເຢື່ອເຄາະຮ້າຍຈາກການຄ້າມະນຸດຢູ່ແຂວງສະຫວັນະເຂ ດໃນປີ2007.ແລະສືບຕໍ່ຈັດຫາຫ້ອງການແລະພະນັກງານເພື່ອຊ່ວຍໂຄງການເພື່ອ ຊາວອົບພະຍົບ.

**ການປ້ອງກັນ**

ລັດຖະບານລາວໄດ້ເພີ້ມຄວາມພະຍາຍາມເພື່ອປ້ອງກັນການຄ້າມະນຸດ ໂດຍໄດ້ຮັບ ການຊ່ວຍເຫຼືອຈາກ ອົງການຈັດຕັ້ງສາກົນ ແລະ ພະນັກງານລັດຖະກອນ. ຕົວຢ່າງ, ກະຊວງແຮງງານແລະສະຫວັດດີການສັງຄົມເຮັດວຽກຮ່ວມກັບອົງການອຸຍນີເຊັບໄດ້ຕິດຕັ້ງກະດານ ຂ່າວຂື້ນຢູ່ໃກ້ກັບດ່ານກວດຄົນເຂົ້າເມືອງແລະຕົວເມືອງໃຫຍ່ຕ່າງໆເພື່ອໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍ ຈາກການຄ້າມະນຸດ. ໃນເດືອນ 12 ປີ 2007,ສະຫະພັນຊາວໝຸ່ມລາວໄດ້ຈັດສຳມະນາຂື້ນໝົດມື້, ສະແດງລະຄອນຕຸກະຕາເພື່ອຕໍ່ຕ້ານການຄ້າມະນຸດ ແລະການຄ້າເດັກນ້ອຍ. ເປັນປະທານ ໃນງານດັ່ງກ່າວມີ ທ່ານລັດຖະມົນຕີຊວ່ຍວ່າການ ແລະລັດຖະມົນຕີ ກະຊວງປ້ອງກັນປະເທດ ທ່ານໄດ້ກ່າວເຖິງຜົນອັນຕະລາຍຂອງການຄ້າມະນຸດ.

ລັດຖະບານໄດ້ສຳເລັດແຜນປະຕິບັດການແຫ່ງຊາດເພື່ອການຕໍ່ຕ້ານການຄ້າມະນຸດ ໃນເດືອນ 7 ປີ 2007.ລັດຖະບານລາວໄດ້ສະແດງຄວາມພະຍາຍາມບາງຢ່າງເພື່ອຢາກລຸດຜ່ອນການຄ້າທາງເພດ ໂດຍມີການກວດລ້າງເປັນໄລຍະຕາມສະຖານບັນເທີງໃນຍາມກາງຄືນ ແລະດິດສໂກ້ເທັກທີ່ໃຊ້ເປັນສາກບັງໜ້າເພື່ອຫາຜົນປະໂຫຍດຈາກການຄ້າທາງເພດ. ໃນເດືອນ 10 ແລະເດືອນ 11 ປີ 2007, ເຈົ້າໜ້າທີ່ຕຳຫຼວດຫຼວງພະບາງໄດ້ສັ່ງປິດຮ້ານກິນດື່ມແລະສະຖານບັນເທີງຫຼາຍແຫ່ງທີ່ນຳໃຊ້ເພື່ອການຄ້າທາງເພດ. ໂດຍທົ່ວໄປນັກທ່ອງທ່ຽວຢູ່ໃນລາວກໍ່ມີການເພີ້ມຂື້ນ ແລະພ້ອມດຽວກັນນັ້ນ ກໍ່ອາດມີຄວາມສ່ຽງສູງກັບການທ່ອງທ່ຽວທີ່ມີເພດສຳພັນກັບເດັກຢູ່ໃນພາກພື້ນນີ້ເປັນສິ່ງດຶງດູດໃຫ້ເຈົ້າໜ້າທີ່ລາວຕ້ອງເອົາໃຈໃສ່ປ້ອງກັນເດັກນ້ອຍບໍ່ໃຫ້ຖືກຮຸກຮານທາງເພດຈາກນັກທ່ອງທ່ຽວບໍລິການທາງເພດເດັກ.

ຢູ່ແຂວງວຽງຈັນກໍ່ໄດ້ສ້າງຕັ້ງໜ່ວຍງານສະເພາະກິດຂື້ນກ່ຽວກັບການທ່ອງທ່ຽວມີເພດສຳພັນເດັກ ໃນເດືອນ 12 ປີ 2007.ເພື່ອຄວາມພະຍາຍາມໃນການຮ່ວມມືລະຫວ່າງເຈົ້າໜ້າທີ່ແລະໜ່ວຍງານທ່ອງທ່ຽວ. ລັດຖະບານແລະອົງການທີ່ບໍ່ຂື້ນກັບລັດຖະບານໄດ້ຈັດສຳມະນາຂື້ນຫຼາຍໆຄັ້ງເພື່ອຝຶກອົບຮົມໃຫ້ພະນັກງານທ່ອງທ່ຽວ, ລວມໄປເຖີງຄົນຂັບລົດແທກຊີ້ (Taxi Drivers) ເມື່ອພົບເຫັນພຶດຕິກຳທີ່ບໍ່ດີຂອງນັກທ່ອງທ່ຽວຈະຕ້ອງລາຍງານແນວໃດ. ຕຳຫຼວດທ່ອງທ່ຽວກໍ່ໄດ້ຮັບການເຝິກອົບຮົມກ່ຽວກັບຄຳແນະນຳເຊິ່ງໄດ້ຖືກຮ່າງຂື້ນໃນເດືອນ 7 ປີ 2007 ເພື່ອຕໍ່ຕ້ານການທ່ອງທ່ຽວ ທາງເພດແລະສາມາດລະບຸຜູ້ທີ່ອາດຈະຕົກເປັນເຫຍື່ອເຄາະຮ້າຍໄດ້. ອົງການທີ່ບໍ່ຂື້ນກັບລັດຖະບານ(NGO’s) ໄດ້ຕິດປິດສະເຕີ້ໄວ້ຕາມບັນດາໂຮງແຮມໃຫຍ່ໆລະດັບສາກົນຢູ່ໃນນະຄອນຫຼວງວຽງຈັນແລະຕົວເມືອງຫຼວງພະບາງເພື່ອເຕືອນໃຫ້ລະວັງກ່ຽວກັບການທ່ອງທ່ຽວທີ່ລວ່ງລະເມີດທາງເພດເດັກ.